ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

0264-

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ________/ອຄ.ກອຫ

ນະຄອນຫຼວງວຽງຈັນ, ວັນທີ 15 MAR 2019

# ຂໍ້ຕົກລົງ
## ວ່າດ້ວຍການຄຸ້ມຄອງໂຮງງານ

- ອີງຕາມກົດໝາຍວ່າດ້ວຍ ອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013.
- ອີງຕາມກົດໝາຍວ່າດ້ວຍ ຫັດຖະກຳ ສະບັບເລກທີ 02/ສພຊ, ລົງວັນທີ 25 ກໍລະກົດ 2008.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017.
- ອີງຕາມໜັງສືສະເໜີຂອງກົມອຸດສາຫະກຳ ແລະ ຫັດຖະກຳ ສະບັບເລກທີ 109/ກອຫ.ຄຣ, ລົງວັນທີ 28 ມັງກອນ 2019.

### ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການສ້າງຕັ້ງ, ການດຳເນີນກິດຈະການ ແລະ ການຄຸ້ມຄອງການເຄື່ອນໄຫວຂອງໂຮງງານ ເພື່ອໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກໂຮງງານ ແລະ ຮັບປະກັນການປົກປັກຮັກສາສິ່ງແວດລ້ອມໂຮງງານ ແນໃສ່ ສົ່ງເສີມການຜະລິດໃຫ້ໄດ້ມາດຕະຖານ, ຜະລິດຕະພັນມີຄຸນນະພາບດີ, ຮັບປະກັນຄວາມປອດໄພ, ສຸຂານາໄມ ຂອງຜູ້ອອກແຮງງານ ແລະ ການເຄື່ອນໄຫວຂອງໂຮງງານ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຕາມທິດທັນເປັນອຸດສາຫະກຳສີຂຽວ ແລະ ຍືນຍົງ.

**ມາດຕາ 2 ການຄຸ້ມຄອງໂຮງງານ**

ການຄຸ້ມຄອງໂຮງງານ ແມ່ນການຄຸ້ມຄອງການສ້າງຕັ້ງ ແລະ ການດຳເນີນກິດຈະການໂຮງງານ ໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກໂຮງງານ ແລະ ລະບຽບກົດໝາຍ ດ້ວຍການອອກໃບຢັ້ງຢືນດຳເນີນກິດຈະການໂຮງງານ ແລະ ມີການຕິດຕາມກວດກາ ຕາມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ໂຮງງານ** ໝາຍເຖິງ ໂຮງງານອຸດສາຫະກຳປຸງແຕ່ງ ແລະ ໂຮງງານຫັດຖະກຳ ທີ່ໄດ້ຈັດເປັນ 24 ປະເພດ ຕາມມາດຕາ 8 ແລະ ໄດ້ຈັດແບ່ງໂຮງງານເປັນ 3 ຂະໜາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013 ແລະ ມາດຕາ 10 ຂອງກົດໝາຍວ່າດ້ວຍຫັດຖະກຳ ສະບັບເລກທີ 02/ສພຊ, ລົງວັນທີ 25 ກໍລະກົດ 2008;

2. **ອົງການອອກໃບຢັ້ງຢືນດຳເນີນກິດຈະການໂຮງງານ** ໝາຍເຖິງ ຂະແໜງການອຸດສາຫະກຳ ແລະ ການຄ້າ ຂັ້ນກະຊວງ, ຂັ້ນພະແນກ ອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ, ຂັ້ນຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ຕາມທີ່ກຳນົດໄວ້ໃນມາດຕາ 62, 63 ແລະ ມາດຕາ 64 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013 ແລະ ຕາມທີ່ກຳນົດໄວ້ໃນມາດຕາ 50, 51 ແລະ ມາດຕາ 52 ຂອງກົດໝາຍວ່າດ້ວຍຫັດຖະກຳ ສະບັບເລກທີ 02/ສພຊ, ລົງວັນທີ 25 ກໍລະກົດ 2008;

3. **ມາດຕະຖານເຕັກນິກໂຮງງານ** ໝາຍເຖິງ ມາດຕະຖານ ດ້ານທີ່ຕັ້ງໂຮງງານ, ອາຄານໂຮງງານ, ເຄື່ອງຈັກ, ອຸປະກອນ, ຄວາມປອດໄພ ແລະ ສຸຂານາໄມ, ຂະບວນການຜະລິດ ແລະ ສິ່ງແວດລ້ອມໂຮງງານ;

4. **ຜູ້ດຳເນີນກິດຈະການໂຮງງານ** ໝາຍເຖິງ ຜູ້ທີ່ໄດ້ຮັບໃບຢັ້ງຢືນດຳເນີນກິດຈະການໂຮງງານ ໂດຍມີຊື່ຂອງຕົນຢູ່ໃນໃບຢັ້ງຢືນດຳເນີນກິດຈະການໂຮງງານ ຖືກຕ້ອງຕາມລະບຽບກົດໝາຍ;

5. **ໃບອະນຸຍາດດຳເນີນທຸລະກິດ** ໝາຍເຖິງ ໃບອະນຸຍາດໃຫ້ເຄື່ອນໄຫວ ສ້າງຕັ້ງໂຮງງານ ຫຼື ທຸລະກິດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ;

6. **ໃບຢັ້ງຢືນດຳເນີນກິດຈະການໂຮງງານ** ໝາຍເຖິງ ໃບອະນຸຍາດໃຫ້ດຳເນີນການຜະລິດ ພາຍຫຼັງທີ່ໂຮງງານໄດ້ສຳເລັດການສ້າງຕັ້ງ, ຕິດຕັ້ງເຄື່ອງຈັກ ແລະ ຜ່ານການຜະລິດທົດລອງແລ້ວ;

7. **ແບບພິມ ຣ/ງ** ໝາຍເຖິງ ເອກະສານກຳນົດຮູບແບບ ເພື່ອປະກອບຂໍ້ມູນໃຫ້ແກ່ການພິຈາລະນາອອກ ຫຼື ຕໍ່ອາຍຸໃບຢັ້ງຢືນດຳເນີນກິດຈະການໂຮງງານ ຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ເປັນຕົ້ນ ຣ/ງ 1 ໃບຄຳຮ້ອງຂໍດຳເນີນກິດຈະການ, ຕໍ່ອາຍຸ ແລະ ຂະຫຍາຍໂຮງງານ, ຣ/ງ 2 ໃບຄຳຮ້ອງຂໍຢຸດເຊົາດຳເນີນກິດຈະການໂຮງງານ ຊົ່ວຄາວ ແລະ ຖາວອນ, ຣ/ງ 3 ໃບຢັ້ງຢືນດຳເນີນກິດຈະການໂຮງງານ;

8. **ແບບພິມ ອ** ໝາຍເຖິງ ເອກະສານກຳນົດຮູບແບບແຜນການເຄື່ອນໄຫວປະຈຳປີຂອງໂຮງງານ ເປັນຕົ້ນ ອ 1 ແຜນການຜະລິດ, ອ 2 ແຜນການຈຳໜ່າຍ, ອ 3 ແຜນຄວາມຕ້ອງການວັດຖຸດິບປະຈຳປີ;

9. **ສິ່ງເສດເຫຼືອ** ໝາຍເຖິງ ສິ່ງທີ່ເກີດຂຶ້ນ ໃນໄລຍະການກໍ່ສ້າງ, ດຳເນີນ ແລະ ຢຸດເຊົາ ກິດຈະການໂຮງງານ ທີ່ບໍ່ສາມາດນຳໃຊ້ໄດ້ ເປັນຕົ້ນ ສິ່ງເສດເຫຼືອປະເພດແຂງ, ແຫຼວ ແລະ ອາຍ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນກິດຈະການໂຮງງານທຸກປະເພດ ແລະ ທຸກຂະໜາດ ຢູ່ ສປປ ລາວ, ຍົກເວັ້ນ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ແບບຄອບຄົວ.

## ພາກທີ II
## ການສ້າງຕັ້ງ ແລະ ການດຳເນີນກິດຈະການໂຮງງານ

### ໝວດທີ 1
### ການສ້າງຕັ້ງໂຮງງານ

**ມາດຕາ 5 ການສະເໜີສ້າງຕັ້ງໂຮງງານ**

ຜູ້ມີຈຸດປະສົງລົງທຶນສ້າງຕັ້ງໂຮງງານ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຍື່ນຄໍາຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຕໍ່ຂະແໜງການອຸດສາຫະກໍາ ແລະ ການຄ້າ ຕາມກົດໝາຍວ່າດ້ວຍວິສາຫະກິດ ສໍາລັບກິດຈະການທົ່ວໄປ ຫຼື ຍື່ນຄໍາຮ້ອງຂໍອະນຸຍາດລົງທຶນ ຕໍ່ຂະແໜງການແຜນການ ແລະ ການລົງທຶນ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສໍາລັບກິດຈະການສໍາປະທານ ແລະ ກິດຈະການໃນບັນຊີຄວບຄຸມ;

2. ຍື່ນຄໍາຮ້ອງຂໍໃບອະນຸຍາດດໍາເນີນທຸລະກິດ ສໍາລັບກິດຈະການອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ ທີ່ຢູ່ໃນບັນຊີຕ້ອງຂໍອະນຸຍາດ ຕໍ່ຂະແໜງການອຸດສາຫະກໍາ ແລະ ການຄ້າ ຕາມລະບຽບການ.

3. ຍື່ນບົດວິພາກເສດຖະກິດ-ເຕັກນິກໂຮງງານ ຕາມແບບພິມ ຮ/ງ 14 ຕໍ່ຂະແໜງການອຸດສາຫະກໍາ ແລະ ການຄ້າ ເພື່ອກວດກາຄວາມຖືກຕ້ອງ;

4. ຍື່ນຄໍາຮ້ອງຂໍ ໃບຢັ້ງຢືນດ້ານສິ່ງແວດລ້ອມ ແລະ ໃບອະນຸຍາດປຸກສ້າງ ຕາມລະບຽບການທີ່ກ່ຽວຂ້ອງ;

5. ເລີ່ມກໍ່ສ້າງໂຮງງານ ພາຍໃນ 90 ວັນ ນັບແຕ່ມື້ອອກໃບອະນຸຍາດປຸກສ້າງ.

## ມາດຕາ 6 ຂັ້ນຕອນການສ້າງຕັ້ງໂຮງງານ

ພາຍຫຼັງໄດ້ຮັບໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດໍາເນີນທຸລະກິດ ຫຼື ໃບອະນຸຍາດລົງທຶນ ຜູ້ລົງທຶນຕ້ອງສ້າງບົດວິພາກເສດຖະກິດ-ເຕັກນິກໂຮງງານ ຕາມແບບພິມ ຮ/ງ 14 ສະເໜີຕໍ່ຂະແໜງການອຸດສາຫະກໍາ ແລະ ການຄ້າ. ພາຍຫຼັງໄດ້ຮັບບົດວິພາກເສດຖະກິດ-ເຕັກນິກ ແລ້ວ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ກວດກາເນື້ອໃນບົດວິພາກເສດຖະກິດ-ເຕັກນິກໂຮງງານ;
2. ປະສານກັບຂະແໜງການທີ່ກ່ຽວຂ້ອງ ລົງກວດກາສະຖານທີ່ຕັ້ງໂຮງງານ;
3. ລົງຕິດຕາມກວດກາ ແລະ ຊຸກຍູ້ສົ່ງເສີມການກໍ່ສ້າງໂຮງງານ ຕາມບົດວິພາກເສດຖະກິດ-ເຕັກນິກໂຮງງານ.

## ມາດຕາ 7 ການລົງກວດກາສະຖານທີ່ຕັ້ງໂຮງງານ

ພາຍຫຼັງກວດກາບົດວິພາກເສດຖະກິດ-ເຕັກນິກ ໂຮງງານແລ້ວ ຂະແໜງການອຸດສາຫະກໍາ ແລະ ການຄ້າ ຕ້ອງປະສານກັບຂະແໜງການທີ່ກ່ຽວຂ້ອງ ເພື່ອລົງກວດກາສະຖານທີ່ຕັ້ງໂຮງງານ. ການລົງກວດກາແຕ່ລະຄັ້ງ ຕ້ອງປະກອບມີຜູ້ຕາງໜ້າຈາກພາກສ່ວນທີ່ກ່ຽວຂ້ອງ ດັ່ງນີ້:

1. ກົມອຸດສາຫະກໍາ ແລະ ຫັດຖະກໍາ ຕາມການແບ່ງຂັ້ນຄຸ້ມຄອງ;
2. ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ຕາມການແບ່ງຂັ້ນຄຸ້ມຄອງ;
3. ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ, ນະຄອນ;
4. ຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ;
5. ນາຍບ້ານ ບ່ອນທີ່ຕັ້ງໂຮງງານ.

ການລົງກວດກາແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກ ຕາມແບບພິມ ຮ/ງ 6 ໂດຍກໍານົດແຈ້ງຈຸດທີ່ຕັ້ງໂຮງງານ, ສະພາບແວດລ້ອມອ້ອມຂ້າງໂຮງງານ ຕາມເງື່ອນໄຂທີ່ກໍານົດໄວ້ໃນ ມາດຕາ 12 ຂອງກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013 ຄື: ໂຮງງານຕ້ອງບໍ່ຕັ້ງຢູ່ໃນເຂດຊຸມຊົນ ແລະ ເຂດຫວງຫ້າມທາງການ ເປັນຕົ້ນ ໂຮງຮຽນ, ໂຮງໝໍ, ວັດ, ແຫຼ່ງວັດທະນາທໍາ, ເຂດປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ປ່າສະຫງວນ, ປ່າປ້ອງກັນ, ປ່າຜະລິດ, ແຫຼ່ງຕົ້ນນໍ້າ, ເຂດອະນຸລັກຊີວະນາໆພັນ ແລະ ເຈົ້າໜ້າທີ່ຜູ້ລົງກວດກາຕ້ອງລົງລາຍເຊັນໃນບົດບັນທຶກ, ເນື້ອໃນການກວດກາຕ້ອງຖືກຕາມລະບຽບກົດໝາຍ ໃນແຕ່ລະໄລຍະ.

## ມາດຕາ 8 ຂະໜາດໂຮງງານ ແລະ ທຶນຂອງກິດຈະການໂຮງງານ

ໂຮງງານອຸດສາຫະກໍາປຸງແຕ່ງ ແລະ ໂຮງງານຫັດຖະກໍາ ປະກອບດ້ວຍສາມຂະໜາດ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 9 ຂອງກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013

ແລະ ມາດຕາ 10 ຂອງກົດໝາຍວ່າດ້ວຍຫັດຖະກຳ ສະບັບເລກທີ 02/ສພຊ, ລົງວັນທີ 25 ກໍລະກົດ 2008 ຄື ດັ່ງນີ້:

1. ໂຮງງານຂະໜາດນ້ອຍ ແມ່ນ ໂຮງງານທີ່ມີກຳລັງແຮງຂອງເຄື່ອງຈັກແຕ່ 10 ແຮງມ້າ ຫາ 50 ແຮງມ້າ ຫຼື ຈຳນວນແຮງງານແຕ່ 10 ຄົນ ຫາ 50 ຄົນ ຫຼື ມູນຄ່າການລົງທຶນທັງໝົດແຕ່ 100 ລ້ານກີບ ຫາ 1 ຕື້ກີບ.

2. ໂຮງງານຂະໜາດກາງ ແມ່ນ ໂຮງງານທີ່ມີກຳລັງແຮງຂອງເຄື່ອງຈັກແຕ່ 51 ແຮງມ້າ ຫາ 200 ແຮງມ້າ ຫຼື ຈຳນວນແຮງງານແຕ່ 51 ຄົນ ຫາ 200 ຄົນ ຫຼື ມູນຄ່າການລົງທຶນທັງໝົດຫຼາຍກວ່າ 1 ຕື້ກີບ ຫາ 4 ຕື້ກີບ.

3. ໂຮງງານຂະໜາດໃຫຍ່ ແມ່ນ ໂຮງງານທີ່ມີກຳລັງແຮງຂອງເຄື່ອງຈັກແຕ່ 201 ແຮງມ້າຂຶ້ນໄປ ຫຼື ຈຳນວນແຮງງານແຕ່ 201 ຄົນຂຶ້ນໄປ ຫຼື ມູນຄ່າການລົງທຶນທັງໝົດຫຼາຍກວ່າ 4 ຕື້ກີບຂຶ້ນໄປ.

ທຶນຈົດທະບຽນຂອງກິດຈະການໂຮງງານ ແມ່ນອີງຕາມຂະໜາດຂອງໂຮງງານ ຊຶ່ງບໍ່ໃຫ້ຫຼຸດ 30% ຂອງ ມູນຄ່າການລົງທຶນທັງໝົດ.

## ໝວດທີ 2
## ການດຳເນີນກິດຈະການໂຮງງານ

### ມາດຕາ 9 ເງື່ອນໄຂ ການດຳເນີນການຜະລິດ

ການດຳເນີນການຜະລິດ ຕ້ອງມີເງື່ອນໄຂດັ່ງນີ້:

1. ສຳເລັດການກໍ່ສ້າງໂຮງງານ;
2. ຜ່ານການຜະລິດທົດລອງ;
3. ມີໃບຢັ້ງຢືນດຳເນີນກິດຈະການໂຮງງານ.

### ມາດຕາ 10 ການສຳເລັດການກໍ່ສ້າງໂຮງງານ

ການສຳເລັດການກໍ່ສ້າງໂຮງງານ ແມ່ນຜົນສຳເລັດຂອງການກໍ່ສ້າງອາຄານໂຮງງານ, ຕິດຕັ້ງເຄື່ອງຈັກ, ຕິດຕັ້ງລະບົບປ້ອງກັນຄວາມປອດໄພ, ສຸຂານາໄມ, ລະບົບກຳຈັດ ແລະ ບຳບັດສິ່ງເສດເຫຼືອ, ມົນລະພິດຕ່າງໆພາຍໃນ ໂຮງງານ ສຳເລັດເປັນທີ່ຮຽບຮ້ອຍ ໂດຍຖືກຕ້ອງຕາມແຜນຜັງເຕັກນິກການກໍ່ສ້າງ ແລະ ຕາມທີ່ສະເໜີໄວ້ຢູ່ໃນບົດວິພາກເສດຖະກິດ-ເຕັກນິກໂຮງງານ.

### ມາດຕາ 11 ການຜະລິດທົດລອງ

ການຜະລິດທົດລອງ ແມ່ນການແລ່ນເຄື່ອງຈັກ ເພື່ອກວດສອບຄວາມພ້ອມຂອງເຄື່ອງຈັກ ພາຍຫຼັງການຕິດຕັ້ງ, ປະສິດທິພາບຂອງເຄື່ອງຈັກ ລວມທັງລະບົບຄວາມປອດໄພ, ລະບົບການກຳຈັດ ແລະ ບຳບັດສິ່ງເສດເຫຼືອ, ມົນລະພິດຕ່າງໆພາຍໃນໂຮງງານ ໂດຍໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກຂອງການອອກແບບ, ຖ້າຈຸດໃດຍັງບໍ່ຖືກຕ້ອງ ຕ້ອງໄດ້ຮັບການປັບປຸງແກ້ໄຂ ແລ້ວຜະລິດທົດລອງ ເພື່ອກວດສອບຄືນໃໝ່.

ການຜະລິດທົດລອງ ໃຊ້ເວລາທັງໝົດສູງສຸດຕ້ອງບໍ່ເກີນ 90 ວັນ ກ່ອນການສະເໜີອອກໃບຢັ້ງຢືນດຳເນີນກິດຈະການໂຮງງານ. ໃນໄລຍະການຜະລິດທົດລອງ ບໍ່ອະນຸຍາດໃຫ້ຈຳໜ່າຍ ຫຼື ຂາຍຜະລິດຕະພັນຂອງໂຮງງານ ເປັນສິນຄ້າໄດ້.

### ມາດຕາ 12 ໃບຢັ້ງຢືນດຳເນີນກິດຈະການໂຮງງານ

ໃບຢັ້ງຢືນດຳເນີນກິດຈະການໂຮງງານ ແມ່ນເອກະສານທາງການທີ່ອະນຸຍາດໃຫ້ດຳເນີນກິດຈະການໂຮງງານ ຖືກຕ້ອງຕາມລະບຽບກົດໝາຍ ອອກໃຫ້ໂດຍກົມອຸດສາຫະກຳ ແລະ ຫັດຖະກຳ, ພະແນກອຸດສາຫະກຳ ແລະ

ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ຫຼື ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຕາມການແບ່ງຂັ້ນຄຸ້ມຄອງ.

ໃບຢັ້ງຢືນດຳເນີນກິດຈະການໂຮງງານ ຕ້ອງສະແດງໄວ້ບ່ອນທີ່ເປີດເຜີຍ ແລະ ເຫັນໄດ້ງ່າຍ ພາຍໃນໂຮງງານ ຫຼື ບໍລິສັດຂອງຕົນ.

**ມາດຕາ 13 ການສະເໜີອອກໃບຢັ້ງຢືນດຳເນີນກິດຈະການໂຮງງານ**

ພາຍຫຼັງຜ່ານການຜະລິດທົດລອງ ກ່ອນດຳເນີນການຜະລິດຖາວອນ ຜູ້ດຳເນີນກິດຈະການ ຕ້ອງປະກອບຄຳຮ້ອງຂໍດຳເນີນກິດຈະການໂຮງງານ ຕາມແບບພິມ ຮ/ງ 1 ຈຳນວນ 3 ຊຸດ ຍື່ນຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມການແບ່ງຂັ້ນຄຸ້ມຄອງ ຄື: ໂຮງງານຂະໜາດໃຫຍ່ ໃຫ້ຍື່ນຢູ່ກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ. ໂຮງງານຂະໜາດກາງ ແລະ ຂະໜາດນ້ອຍ ໃຫ້ຍື່ນຢູ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ຫຼື ຍື່ນຢູ່ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຕາມການມອບໝາຍຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ຂະແໜງການອຸດສາຫະກຳ ແລະ ການຄ້າ ຕ້ອງສົມທົບກັບຂະແໜງການທີ່ກ່ຽວຂ້ອງ ລົງກວດການມາດຕະຖານເຕັກນິກໂຮງງານ ພາຍໃນ 5 ວັນລັດຖະການ. ໃນກໍລະນີເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ຕ້ອງແຈ້ງໃຫ້ຜູ້ສະເໜີຂໍດຳເນີນກິດຈະການໂຮງງານ ຮັບຊາບພາຍໃນ 5 ວັນ ນັບແຕ່ມື້ໄດ້ຮັບເອກະສານ ເພື່ອປັບປຸງໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

**ມາດຕາ 14 ການປະກອບເອກະສານ ສະເໜີອອກໃບຢັ້ງຢືນດຳເນີນກິດຈະການໂຮງງານ**

ການສະເໜີອອກໃບຢັ້ງຢືນດຳເນີນກິດຈະການໂຮງງານ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຄຳຮ້ອງຂໍດຳເນີນກິດຈະການໂຮງງານ ຕາມແບບພິມ ຮ/ງ 1;
2. ໃບມອບສິດໃຫ້ຜູ້ມາພົວພັນປະກອບເອກະສານ ກໍລະນີທີ່ບໍ່ໄດ້ມາພົວພັນດ້ວຍຕົນເອງ;
3. ແຜນວາດຂະບວນການຜະລິດ ພ້ອມບົດອະທິບາຍ;
4. ລາຍການເຄື່ອງຈັກໃນໂຮງງານ;
5. ແຜນການເຄື່ອນໄຫວປະຈຳປີຂອງໂຮງງານ ຕາມແບບພິມ ອ;
6. ແຜນຜັງການກໍ່ສ້າງ ແລະ ລະບົບເຕັກນິກເຄື່ອງຈັກໂຮງງານ ຂະໜາດເຈັ້ຍ $A_3$ ທີ່ຖືກຕ້ອງຕາມລະບຽບການກ່ຽວກັບການປຸກສ້າງ ເຊັ່ນ:
   1) ແຜນຜັງສະແດງໃຫ້ເຫັນທີ່ຕັ້ງໂຮງງານ ໃນຂອບເຂດລັດສະໝີ 500 ແມັດ;
   2) ແຜນຜັງສະແດງສິ່ງປຸກສ້າງໃນບໍລິເວນໂຮງງານ;
   3) ແຜນຜັງກໍ່ສ້າງອາຄານຜະລິດ ຮູບດ້ານໜ້າ, ຂ້າງ, ຫຼັງ ແລະ ຮູບຕັດ;
   4) ແຜນຜັງຕິດຕັ້ງເຄື່ອງຈັກ ແລະ ເຄື່ອງຍົກນ້ຳໜັກ ຕາມເລກໝາຍຂອງລາຍການເຄື່ອງຈັກຂໍ້ທີ 4;
   5) ແຜນຜັງຕິດຕັ້ງເຕົາອົບ ແລະ ໝໍ້ຕົ້ມນ້ຳ ຫຼື ເຕົາສະຕີມ, ຖ້າມີ;
   6) ແຜນຜັງຕິດຕັ້ງລະບົບໄຟຟ້າ, ພັດລົມ ແລະ ລະບົບລະບາຍອາກາດ;
   7) ແຜນຜັງຕິດຕັ້ງລະບົບປ້ອງກັນອັນຕະລາຍ, ອັກຄີໄພ ແລະ ທາງອອກສຸກເສີນ.
7. ຮູບຖ່າຍຂະໜາດ 3x4 ຊັງຕີແມັດ ຈຳນວນ 4 ໃບ ຮູບຖ່າຍຕ້ອງບໍ່ເກີນ 3 ເດືອນ.

**ສຳເນົາເອກະສານຄັດຕິດ ມີດັ່ງນີ້:**

1. ໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ ຫຼື ໃບອະນຸຍາດລົງທຶນ;
2. ໃບຢັ້ງຢືນການມອບເລກປະຈຳຕົວຜູ້ເສຍອາກອນ ຫຼື ໃບຢັ້ງຢືນການມອບພັນທະອາກອນ;
3. ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ສຳລັບໂຮງງານທີ່ຢູ່ໃນບັນຊີການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;

4. ໃບອະນຸຍາດປຸກສ້າງໂຮງງານ;

5. ໃບຢັ້ງຢືນແຜນການຕິດຕັ້ງລະບົບບຳບັດ ແລະ/ຫຼື ໃບຢັ້ງຢືນການປ່ອຍສິ່ງເສດເຫຼືອ ອອກຈາກໂຮງງານ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ທີ່ກ່ຽວຂ້ອງ;

6. ໃບສັນຍາເຊົ່າທີ່ດິນ/ອາຄານ ຫຼື ໃບມອບກຳມະສິດທີ່ດິນ ແລະ ໃບຕາດິນ;

7. ໃບຢັ້ງຢືນຄຸນນະພາບຜະລິດຕະພັນ ສຳລັບຜະລິດຕະພັນອາຫານ, ເຄື່ອງດື່ມ ແລະ ຢາປົວພະຍາດ.

**ມາດຕາ 15 ການລົງກວດກາ ເພື່ອພິຈາລະນາອອກໃບຢັ້ງຢືນດຳເນີນກິດຈະການໂຮງງານ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ກຳນົດໄວ້ໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້ແລ້ວ ຂະແໜງການອຸດສາຫະກຳ ແລະ ການຄ້າ ຕ້ອງສົມທົບກັບຂະແໜງການທີ່ກ່ຽວຂ້ອງ ລົງກວດກາມາດຕະຖານເຕັກນິກໂຮງງານ ຕາມທີ່ໄດ້ກຳນົດໄວ້ໃນແຜນຜັງການກໍ່ສ້າງ, ແຜນຜັງລະບົບເຕັກນິກເຄື່ອງຈັກໂຮງງານ, ແຜນຜັງລະບົບກຳຈັດ ແລະ ບຳບັດສິ່ງເສດເຫຼືອ ແລະ ບົດວິພາກເສດຖະກິດ-ເຕັກນິກໂຮງງານ ທຽບໃສ່ຕົວຈິງ. ການລົງກວດກາຕ້ອງເຮັດບົດບັນທຶກ ຕາມແບບພິມ ຣ/ງ 7.

ຜ່ານການກວດກາ ຫາກເຫັນວ່າ ຍັງບໍ່ສາມາດໃຫ້ດຳເນີນການຜະລິດໄດ້ ຍ້ອນວ່າຍັງບໍ່ທັນຮັບປະກັນດ້ານມາດຕະຖານເຕັກນິກ ສ່ວນໃດໜຶ່ງຂອງໂຮງງານ, ຄະນະກຳມະການກວດກາ ຕ້ອງແນະນຳເພື່ອປັບປຸງຄືນ ໂດຍໃຫ້ກຳນົດເວລາທີ່ຊັດເຈນໃນບົດບັນທຶກ.

ພາຍຫຼັງໄດ້ປັບປຸງຕາມຄຳແນະນຳໃນບົດບັນທຶກແລ້ວ ໃຫ້ສະເໜີຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ເພື່ອລົງກວດກາຄືນ ແລະ ເຮັດບົດບັນທຶກຜົນການປັບປຸງໂຮງງານ ຕາມແບບພິມ ຣ/ງ 8. ໃນກໍລະນີ ບໍ່ສາມາດປັບປຸງທັນຕາມກຳນົດເວລາ ຕ້ອງແຈ້ງເຫດຜົນຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຊາບພາຍໃນ 5 ວັນລັດຖະການ ນັບແຕ່ມື້ໝົດກຳນົດເວລາໃນບົດບັນທຶກກວດກາໂຮງງານ.

**ມາດຕາ 16 ການພິຈາລະນາອອກໃບຢັ້ງຢືນດຳເນີນກິດຈະການໂຮງງານ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ, ໄດ້ລົງກວດກາມາດຕະຖານເຕັກນິກໂຮງງານ ແລະ ມີບົດບັນທຶກກວດກາໂຮງງານ ຫຼື ບົດບັນທຶກຜົນການປັບປຸງໂຮງງານ ທີ່ເຫັນດີໃຫ້ດຳເນີນກິດຈະການໂຮງງານໄດ້ ຂະແໜງການອຸດສາຫະກຳ ແລະ ການຄ້າ ຕ້ອງພິຈາລະນາອອກໃບຢັ້ງຢືນດຳເນີນກິດຈະການໂຮງງານ ພາຍໃນ 5 ວັນລັດຖະການ ນັບແຕ່ມື້ໄດ້ຮັບບົດບັນທຶກ ຕາມແບບພິມ ຣ/ງ 3.

ພາຍຫຼັງໄດ້ອອກໃບຢັ້ງຢືນດຳເນີນກິດຈະການໂຮງງານແລ້ວ ສຳລັບໂຮງງານຂະໜາດໃຫຍ່ ຕ້ອງຈ້ຳກາຂອງກົມໃສ່ເອກະສານທັງໝົດ ແລະ ສຳເນົາໄວ້ກົມອຸດສາຫະກຳ ແລະ ຫັດຖະກຳ 1 ຊຸດ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ 1 ຊຸດ ແລະ ໂຮງງານ 1 ຊຸດ. ສຳລັບໂຮງງານຂະໜາດກາງ ແລະ ຂະໜາດນ້ອຍ ຕ້ອງຈ້ຳກາຂອງພະແນກໃສ່ເອກະສານທັງໝົດ ແລະ ສຳເນົາໄວ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ 1 ຊຸດ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ 1 ຊຸດ ແລະ ໂຮງງານ 1 ຊຸດ ເພື່ອຄຸ້ມຄອງ, ຕິດຕາມ ແລະ ກວດກາ ຕາມລະບຽບກົດໝາຍ.

**ມາດຕາ 17 ອາຍຸໃບຢັ້ງຢືນດຳເນີນກິດຈະການໂຮງງານ**

ໃບຢັ້ງຢືນດຳເນີນກິດຈະການໂຮງງານ ມີອາຍຸການນຳໃຊ້ໄດ້ 3 ປີ ແລະ ສາມາດຕໍ່ໄດ້. ຍົກເວັ້ນ ປະເພດກິດຈະການໂຮງງານທີ່ມີຄວາມສ່ຽງສູງ ຕໍ່ສຸຂະພາບຂອງຜູ້ອອກແຮງງານຢູ່ໃນໂຮງງານ ແລະ ສິ່ງແວດລ້ອມ ທີ່ຕ້ອງຕິດຕາມ ແລະ ຄວບຄຸມດ້ານມາດຕະຖານເຕັກນິກສະເພາະ ແຕ່ລະໄລຍະ ແມ່ນມີອາຍຸນຳໃຊ້ຕ່ຳກວ່າ 3 ປີລົງມາ.

**ມາດຕາ 18 ການຕໍ່ອາຍຸໃບຢັ້ງຢືນດໍາເນີນກິດຈະການໂຮງງານ**

ກ່ອນມື້ໝົດອາຍຸໃບຢັ້ງຢືນດໍາເນີນກິດຈະການໂຮງງານ 30 ວັນ ຜູ້ດໍາເນີນກິດຈະການໂຮງງານ ຕ້ອງຍື່ນຄໍາຮ້ອງຕໍ່ຂະແໜງການອຸດສາຫະກໍາ ແລະ ການຄ້າ ເພື່ອຕໍ່ອາຍຸໃບຢັ້ງຢືນດໍາເນີນກິດຈະການໂຮງງານ ຕາມຂັ້ນຕອນດັ່ງນີ້:

1. ຍື່ນຄໍາຮ້ອງຕໍ່ອາຍຸໃບຢັ້ງຢືນດໍາເນີນກິດຈະການໂຮງງານ ຕາມແບບພິມ ຣ/ງ 1 ພ້ອມທັງລາຍງານສະພາບການດໍາເນີນກິດຈະການໂຮງງານ ໄລຍະຜ່ານມາ ຕາມແບບພິມ ຣ/ງ 12, ພ້ອມດ້ວຍເອກະສານກ່ຽວຂ້ອງ ທີ່ກໍານົດໄວ້ໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້ ໃນກໍລະນີທີ່ມີການປ່ຽນແປງຈາກເດີມ;

2. ຂັ້ນຕອນການພິຈາລະນາ ຕໍ່ອາຍຸໃບຢັ້ງຢືນດໍາເນີນກິດຈະການໂຮງງານ ໃຫ້ປະຕິບັດຄືກັນກັບຂັ້ນຕອນການພິຈາລະນາ ອອກໃບຢັ້ງຢືນດໍາເນີນກິດຈະການໂຮງງານ ຕາມມາດຕາ 16 ຂອງຂໍ້ຕົກລົງສະບັບນີ້ ແລະ ພ້ອມທັງເຮັດບົດບັນທຶກການກວດກາ ຕາມແບບພິມ ຣ/ງ 7 ພາຍຫຼັງໄດ້ປະຕິບັດຄົບຖ້ວນຕາມຂັ້ນຕອນການພິຈາລະນາ ແລະ ປະຕິບັດຖືກຕ້ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງແລ້ວ ຕ້ອງຕໍ່ໃບຢັ້ງຢືນດໍາເນີນກິດຈະການໂຮງງານ ຕາມແບບພິມ ຣ/ງ 4.

ການຕໍ່ອາຍຸໃບຢັ້ງຢືນດໍາເນີນກິດຈະການໂຮງງານແຕ່ລະຄັ້ງ ແມ່ນມີກໍານົດເວລາຄືກັນກັບສະບັບຕົ້ນ, ຍົກເວັ້ນໃນກໍລະນີອາຍຸສັນຍາເຊົ່າດິນປຸກສ້າງໂຮງງານຈະໝົດອາຍຸ ແມ່ນໃຫ້ຕໍ່ຕາມກໍານົດເວລາທີ່ຍັງເຫຼືອໃນສັນຍາ.

**ມາດຕາ 19 ການຢຸດເຊົາການດໍາເນີນກິດຈະການໂຮງງານ**

ຜູ້ດໍາເນີນກິດຈະການໂຮງງານ ສາມາດຢຸດເຊົາການດໍາເນີນກິດຈະການໂຮງງານໄດ້ ຊຶ່ງມີ 2 ກໍລະນີຄື: ການຢຸດເຊົາຊົ່ວຄາວ ແລະ ການຢຸດເຊົາຖາວອນ ໂດຍຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການຢຸດເຊົາຊົ່ວຄາວ: ຜູ້ດໍາເນີນກິດຈະການໂຮງງານ ຈະຢຸດເຊົາການດໍາເນີນກິດຈະການໂຮງງານຊົ່ວຄາວ ຕ້ອງປະກອບຄໍາຮ້ອງຂໍຢຸດເຊົາ ຕໍ່ຂະແໜງການອຸດສາຫະກໍາ ແລະ ການຄ້າ ພ້ອມເຫດຜົນ ຕາມແບບພິມ ຣ/ງ 2, ພາຍໃນ 10 ວັນກ່ອນມື້ຢຸດເຊົາ, ເພື່ອພິຈາລະນາອອກໃບຢັ້ງຢືນການຢຸດເຊົາຊົ່ວຄາວ ຕາມແບບພິມ ຣ/ງ 5.

ພາຍຫຼັງຢຸດເຊົາແລ້ວ ກ່ອນຈະດໍາເນີນກິດຈະການໂຮງງານຄືນໃໝ່ ໃຫ້ສະເໜີຕໍ່ຂະແໜງການອຸດສາຫະກໍາ ແລະ ການຄ້າ ເພື່ອກວດກາສະພາບໂຮງງານ ແລະ ພິຈາລະນາອອກໃບຢັ້ງຢືນດໍາເນີນກິດຈະການໂຮງງານ ຄືນໃໝ່. ໃນການພິຈາລະນາໃຫ້ປະຕິບັດຕາມຂັ້ນຕອນທີ່ກໍານົດໄວ້ໃນມາດຕາ 16 ຂອງຂໍ້ຕົກລົງສະບັບນີ້.

2. ການຢຸດເຊົາຖາວອນ: ການຢຸດເຊົາການດໍາເນີນກິດຈະການໂຮງງານຖາວອນ ທັງໝົດທຸກສ່ວນຂອງໂຮງງານ ຕ້ອງປະກອບຄໍາຮ້ອງຂໍຢຸດເຊົາຕໍ່ຂະແໜງການອຸດສາຫະກໍາ ແລະ ການຄ້າ ພ້ອມເຫດຜົນ ຕາມແບບພິມ ຣ/ງ 2, ພາຍໃນ 15 ວັນກ່ອນມື້ຢຸດເຊົາ, ເພື່ອອອກໃບຢັ້ງຢືນການຢຸດເຊົາ ຕາມແບບພິມ ຣ/ງ 5 ແລະ ລຶບລ້າງໃບຢັ້ງຢືນດໍາເນີນກິດຈະການໂຮງງານ. ຖ້າຢຸດເຊົາສ່ວນໃດໜຶ່ງຂອງໂຮງງານ ຕ້ອງພິຈາລະນາດັດແກ້ໃບຢັ້ງຢືນດໍາເນີນກິດຈະການໂຮງງານ.

ສໍາລັບກິດຈະການທີ່ມີສິ່ງເສດເຫຼືອອັນຕະລາຍຢູ່ພາຍໃນໂຮງງານ, ກ່ອນຢຸດເຊົາດໍາເນີນກິດຈະການໂຮງງານຖາວອນ ຕ້ອງໄດ້ກໍາຈັດ ຫຼື ບໍາບັດສິ່ງເສດເຫຼືອອັນຕະລາຍ ໃຫ້ຖືກຕ້ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 20 ການຖອນໃບຢັ້ງຢືນດໍາເນີນກິດຈະການໂຮງງານ**

ການຖອນໃບຢັ້ງຢືນດໍາເນີນກິດຈະການໂຮງງານ ໃຫ້ປະຕິບັດ 3 ກໍລະນີ ດັ່ງນີ້:

1. ໄດ້ຢຸດເຊົາການດໍາເນີນກິດຈະການໂຮງງານຖາວອນ ຕາມມາດຕາ 19 ຂໍ້ 2 ຂອງຂໍ້ຕົກລົງສະບັບນີ້;

2. ມີອຸປະຕິເຫດເກີດຂຶ້ນພາຍໃນໂຮງງານ ຕາມທີ່ກໍານົດໄວ້ໃນມາດຕາ 31 ຂອງຂໍ້ຕົກລົງສະບັບນີ້, ພາຍຫຼັງທີ່ເຈົ້າໜ້າທີ່ກວດກາໂຮງງານໄດ້ເຂົ້າກວດກາໂຮງງານ ແລະ ເຄື່ອງຈັກແລ້ວ ເຫັນວ່າໂຮງງານ ຫຼື ເຄື່ອງຈັກນັ້ນ ບໍ່ສາມາດສ້ອມແປງໃຫ້ຢູ່ໃນສະພາບທີ່ໃຊ້ການໄດ້ ແລະ ບໍ່ມີຄວາມປອດໄພຕໍ່ຜູ້ອອກແຮງງານ. ຖ້າຜູ້ດໍາເນີນກິດຈະ

ການໂຮງງານ ຫາກສາມາດສ້ອມແປງ ແລະ ປັບປຸງໂຮງງານຄືນ ໃຫ້ຢູ່ໃນສະພາບດີ ຫຼື ສ້າງຕັ້ງໂຮງງານຂຶ້ນໃໝ່ປ່ຽນແທນໂຮງງານເດີມ ໃຫ້ສະເໜີຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ເພື່ອອອກໃບຢັ້ງຢືນດຳເນີນກິດຈະການໂຮງງານສະບັບໃໝ່ ຕາມຂັ້ນຕອນທີ່ກຳນົດໄວ້ໃນມາດຕາ 13 ຂອງຂໍ້ຕົກລົງສະບັບນີ້;

3. ເຄື່ອນໄຫວຜິດຕໍ່ລະບຽບກົດໝາຍທີ່ກ່ຽວຂ້ອງໂດຍເຈດຕະນາ ເປັນຕົ້ນ ລະເມີດຂໍ້ຫ້າມທີ່ກຳນົດໄວ້ໃນມາດຕາ 51 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 21 ການຂໍໃບຢັ້ງຢືນດຳເນີນກິດຈະການໂຮງງານ ສະບັບປ່ຽນແທນ**

ໃນກໍລະນີໃບຢັ້ງຢືນດຳເນີນກິດຈະການໂຮງງານເສຍຫາຍ ຫຼື ຖືກທຳລາຍ ຜູ້ດຳເນີນກິດຈະການໂຮງງານຕ້ອງແຈ້ງຕໍ່ອົງການປົກຄອງທ້ອງຖິ່ນ ຕາມລະບຽບການ ແລ້ວຕ້ອງຍື່ນຄຳຮ້ອງຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ພາຍໃນ 15 ວັນ ລັດຖະການ ນັບແຕ່ມື້ໄດ້ຮັບໃບຢັ້ງຢືນ ແຈ້ງເສຍຫາຍຈາກອົງການປົກຄອງທ້ອງຖິ່ນ ເພື່ອສະເໜີອອກໃບຢັ້ງຢືນດຳເນີນກິດຈະການໂຮງງານສະບັບປ່ຽນແທນ.

**ມາດຕາ 22 ຄ່າທຳນຽມ ອອກໃບຢັ້ງຢືນດຳເນີນກິດຈະການໂຮງງານ**

ຄ່າທຳນຽມ ອອກໃບຢັ້ງຢືນດຳເນີນກິດຈະການໂຮງງານ, ຕໍ່ອາຍຸດຳເນີນກິດຈະການ, ຂະຫຍາຍໂຮງງານ ແລະ ໃບຢັ້ງຢືນດຳເນີນກິດຈະການໂຮງງານສະບັບປ່ຽນແທນ ໃຫ້ຄິດໄລ່ຕາມແຮງມ້າປຽບທຽບເຄື່ອງຈັກ ຫຼື ຈຳນວນແຮງງານທັງໝົດ ທີ່ນຳໃຊ້ຢູ່ພາຍໃນໂຮງງານ. ລາຍລະອຽດໄດ້ກຳນົດໄວ້ ໃນລັດຖະບັນຍັດຂອງປະທານປະເທດ ກ່ຽວກັບການເກັບຄ່າທຳນຽມ ແຕ່ລະໄລຍະ.

## ໝວດທີ 3
## ການຄຸ້ມຄອງການເຄື່ອນໄຫວຂອງໂຮງງານ

**ມາດຕາ 23 ການຄຸ້ມຄອງການເຄື່ອນໄຫວຂອງໂຮງງານ**

ການຄຸ້ມຄອງການເຄື່ອນໄຫວຂອງໂຮງງານ ປະກອບມີດັ່ງນີ້:

1. ສ້າງແຜນການເຄື່ອນໄຫວກິດຈະການໂຮງງານ;
2. ຄຸ້ມຄອງຂະບວນການຜະລິດ;
3. ຄຸ້ມຄອງການນຳເຂົ້າເຄື່ອງຈັກ, ອຸປະກອນ ແລະ ອາໄຫຼ່;
4. ຄຸ້ມຄອງການນຳເຂົ້າວັດຖຸດິບ, ວັດຖຸເຄິ່ງສຳເລັດຮູບ;
5. ຄຸ້ມຄອງຜະລິດຕະພັນ;
6. ຄຸ້ມຄອງການກຳຈັດ ແລະ ບຳບັດສິ່ງເສດເຫຼືອ;
7. ຄຸ້ມຄອງຄວາມປອດໄພ ແລະ ສຸຂານາໄມ;
8. ມາດຕະການແກ້ໄຂການເກີດອຸປະຕິເຫດ ຢູ່ໃນໂຮງງານ.

**ມາດຕາ 24 ການສ້າງແຜນການເຄື່ອນໄຫວປະຈຳປີຂອງໂຮງງານ**

ຜູ້ດຳເນີນກິດຈະການໂຮງງານ ຕ້ອງສ້າງແຜນການເຄື່ອນໄຫວປະຈຳປີ ແລະ ປະຈຳງວດ ຕາມແບບພິມ ຍ ເຊັ່ນ: ແຜນການຜະລິດ, ແຜນການຈຳໜ່າຍ, ແຜນຄວາມຕ້ອງການວັດຖຸດິບປະຈຳປີ, ໃບຄິດໄລ່ລາຄາສຳເລັດຮູບຕໍ່ຫົວໜ່ວຍຜະລິດຕະພັນ, ກຳນົດໝາຍເສດຖະກິດ-ເຕັກນິກ ການສິ້ນເປືອງຕໍ່ຫົວໜ່ວຍຜະລິດຕະພັນ ແລະ ການສະຫຼຸບການນຳເຂົ້າວັດຖຸດິບ, ອາໄຫຼ່, ອຸປະກອນ, ຊິ້ນສ່ວນ, ເຄື່ອງຈັກອຸດສາຫະກຳ ແລ້ວນຳສະເໜີຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາຮັບຮອງ.

ຜູ້ດຳເນີນກິດຈະການໂຮງງານ ຕ້ອງສະຫຼຸບລາຍງານຂໍ້ມູນການເຄື່ອນໄຫວການຜະລິດຕົວຈິງຂອງໂຮງງານ ຕາມແຜນການເຄື່ອນໄຫວປະຈຳປີຂ້າງເທິງນີ້ ສົ່ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ເປັນແຕ່ລະງວດ, ປີ ຕາມທີ່ກຳນົດໄວ້ຢູ່ໃນຂໍ້ 7 ມາດຕາ 50 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013.

### ມາດຕາ 25 ການຄຸ້ມຄອງຂະບວນການຜະລິດ

ໂຮງງານທຸກຂະໜາດ ທີ່ນຳໃຊ້ວັດຖຸດິບຈາກທຳມະຊາດ ຕ້ອງສ້າງລະບົບຄຸ້ມຄອງຂະບວນການຜະລິດ ເປັນຕົ້ນ ການຄຸ້ມຄອງສິນເຂົ້າວັດຖຸດິບ ແລະ ສິນອອກຜະລິດຕະພັນ ເພື່ອຮັບປະກັນດ້ານວັດຖຸດິບ, ການປຸງແຕ່ງ ແລະ ຜະລິດຕະພັນ ໄດ້ມາດຕະຖານ, ມີຄຸນນະພາບດີ ແລະ ມີຄວາມປອດໄພຕໍ່ການໃຊ້ງານ. ນອກຈາກນີ້ ກໍເພື່ອຮັບປະກັນການນຳໃຊ້ວັດຖຸດິບ, ພະລັງງານ ຢ່າງປະຢັດ ແລະ ມີປະສິດທິຜົນສູງ. ການຄຸ້ມຄອງສິນເຂົ້າວັດຖຸດິບ ແລະ ສິນອອກຜະລິດຕະພັນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 26 ການຄຸ້ມຄອງການນຳເຂົ້າເຄື່ອງຈັກ, ອຸປະກອນ ແລະ ອາໄຫຼ່

ການນຳເຂົ້າເຄື່ອງຈັກ, ອຸປະກອນ ແລະ ອາໄຫຼ່ ລວມທັງວັດຖຸອຸປະກອນກໍ່ສ້າງໂຮງງານ ເພື່ອມານຳໃຊ້ຢູ່ໃນໂຮງງານ ຕ້ອງຂໍອະນຸຍາດນຳເຂົ້າ ຈາກຂະແໜງການອຸດສາຫະກຳ ແລະ ການຄ້າ.

ເຄື່ອງຈັກ, ອຸປະກອນ ແລະ ອາໄຫຼ່ ລວມທັງວັດຖຸອຸປະກອນກໍ່ສ້າງໂຮງງານທີ່ນຳເຂົ້າ ຕ້ອງມີຄຸນນະພາບດີ, ເປັນເຕັກໂນໂລຊີທີ່ດີ, ຖືກກັບເປົ້າໝາຍຂອງການດຳເນີນກິດຈະການ, ສອດຄ່ອງກັບບົດວິພາກເສດຖະກິດ-ເຕັກນິກ ແລະ ແຜນການຜະລິດປະຈຳປີຂອງໂຮງງານ.

ຂັ້ນຕອນການນຳເຂົ້າເຄື່ອງຈັກ, ອຸປະກອນ ແລະ ອາໄຫຼ່ຂອງໂຮງງານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 27 ການຄຸ້ມຄອງການນຳເຂົ້າວັດຖຸດິບ ແລະ ວັດຖຸເຄິ່ງສຳເລັດຮູບ

ການນຳເຂົ້າວັດຖຸດິບ ແລະ ວັດຖຸເຄິ່ງສຳເລັດຮູບ ເພື່ອມາທຳການຜະລິດຢູ່ໃນໂຮງງານ ຕ້ອງຂໍອະນຸຍາດນຳເຂົ້າຈາກຂະແໜງການອຸດສາຫະກຳ ແລະ ການຄ້າ. ວັດຖຸດິບ ແລະ ວັດຖຸເຄິ່ງສຳເລັດຮູບທີ່ນຳເຂົ້າ ຕ້ອງໄດ້ມາດຕະຖານ ແລະ ມີຄຸນນະພາບດີ, ຖືກຕ້ອງຕາມເປົ້າໝາຍຂອງການຜະລິດ, ສອດຄ່ອງກັບບົດວິພາກເສດຖະກິດ-ເຕັກນິກ ແລະ ແຜນການຜະລິດປະຈຳປີ ຂອງໂຮງງານ.

ຂັ້ນຕອນການນຳເຂົ້າວັດຖຸດິບ ແລະ ວັດຖຸເຄິ່ງສຳເລັດຮູບຂອງໂຮງງານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ສຳລັບການນຳເຂົ້າເຄມີ, ສິ່ງເສດເຫຼືອເຄມີອັນຕະລາຍ ແລະ ສິ່ງເສດເຫຼືອອັນຕະລາຍ ເພື່ອຮັບໃຊ້ໃນຂະບວນການຜະລິດ ຫຼື ປຸງແຕ່ງ ຕ້ອງປະຕິບັດຕາມລະບຽບກົດໝາຍ ສະເພາະ.

### ມາດຕາ 28 ການຄຸ້ມຄອງຜະລິດຕະພັນ

ຜະລິດຕະພັນທີ່ໄດ້ຜ່ານຂະບວນການຜະລິດຂອງໂຮງງານ ຕ້ອງຮັບປະກັນໃຫ້ມີຄຸນນະພາບດີ ແລະ ໄດ້ມາດຕະຖານ, ມີສຸຂານາໄມທີ່ດີ ແລະ ມີຄວາມປອດໄພຕໍ່ຜູ້ຊົມໃຊ້ ຫຼື ຜູ້ບໍລິໂພກ ໂດຍຖືກຕ້ອງຕາມລະບຽບການທາງດ້ານເຕັກນິກ ຫຼື ມາດຕະຖານໃດໜຶ່ງ ທີ່ຕະຫຼາດຕ້ອງການ.

ຜູ້ດຳເນີນກິດຈະການໂຮງງານ ສາມາດສະເໜີຂໍຢັ້ງຢືນຜະລິດຕະພັນ, ກາໝາຍຢັ້ງຢືນຜະລິດຕະພັນ ຫຼື ຢັ້ງຢືນມາດຕະຖານຜະລິດຕະພັນ ຕໍ່ຂະແໜງການທີ່ກ່ຽວຂ້ອງ. ສຳລັບຜະລິດຕະພັນອາຫານ, ເຄື່ອງດື່ມ ແລະ ຢາປົວພະຍາດ ຕ້ອງໄດ້ຮັບການຢັ້ງຢືນຄຸນນະພາບ ຈາກຂະແໜງການທີ່ກ່ຽວຂ້ອງຕາມລະບຽບກົດໝາຍ ສະເພາະ.

**ມາດຕາ 29 ການຄຸ້ມຄອງການກຳຈັດ ແລະ ບຳບັດສິ່ງເສດເຫຼືອ**

ການສ້າງຕັ້ງ ແລະ ການດຳເນີນກິດຈະການໂຮງງານ ທີ່ກໍ່ໃຫ້ເກີດສິ່ງເສດເຫຼືອປະເພດຕ່າງໆ ເປັນຕົ້ນ ມົນລະພິດທາງອາກາດ, ນ້ຳເສຍຄຸນ, ສິ່ງເສດເຫຼືອປະເພດແຂງ ແລະ ອັນຕະລາຍ, ແສງ, ສຽງດັງ, ຄວາມສັ່ນສະເທືອນ ແລະ ອື່ນໆ ຕ້ອງໄດ້ທຳການບຳບັດ ແລະ ກຳຈັດສິ່ງເສດເຫຼືອເຫຼົ່ານັ້ນ ໃຫ້ຢູ່ໃນເກນມາດຕະຖານ ຈຶ່ງສາມາດປ່ອຍອອກສູ່ສິ່ງແວດລ້ອມພາຍນອກໄດ້.

ຜູ້ດຳເນີນກິດຈະການໂຮງງານ ຕ້ອງໄດ້ອອກແບບລະບົບບຳບັດ ແລະ ກຳຈັດສິ່ງເສດເຫຼືອ ຂອງໂຮງງານ ແລ້ວນຳສະເໜີຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອພິຈາລະນາຮັບຮອງ, ຫຼັງຈາກນັ້ນ ຈຶ່ງສາມາດດຳເນີນການກໍ່ສ້າງ, ຕິດຕັ້ງລະບົບບຳບັດ ແລະ ກຳຈັດສິ່ງເສດເຫຼືອໄດ້.

ມາດຕະຖານກ່ຽວກັບສິ່ງເສດເຫຼືອ ທີ່ປ່ອຍອອກຈາກໂຮງງານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 30 ການຄຸ້ມຄອງຄວາມປອດໄພ ແລະ ສຸຂານາໄມ ໂຮງງານ**

ພາຍໃນໂຮງງານ ຕ້ອງມີລະບົບຄວາມປອດໄພ ແລະ ມີໜ່ວຍງານບໍລິຫານຄວາມປອດໄພ ແລະ ສຸຂານາໄມສະເພາະ ໂດຍມີຈຳນວນພຽງພໍ ແລະ ແທດເໝາະກັບປະເພດ ແລະ ຂະໜາດຂອງແຕ່ລະໂຮງງານ, ຊຶ່ງໜ່ວຍງານບໍລິຫານຄວາມປອດໄພ ແລະ ສຸຂານາໄມ ມີໜ້າທີ່ໃນການກວດກາ, ຕິດຕາມ, ລາຍງານ, ປະສານສົມທົບ ແລະ ຈັດຝຶກອົບຮົມ ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂານາໄມ ແນໃສ່ເພື່ອຫຼີກລ້ຽງອຸປະຕິເຫດແຮງງານ, ພະຍາດອາຊີບ, ຜົນກະທົບຕໍ່ສຸຂະພາບຂອງຜູ້ອອກແຮງງານ, ຮັກສາຄວາມເປັນລະບຽບ, ຄວາມສະອາດ ແລະ ສຸຂານາໄມພາຍໃນໂຮງງານ ໃຫ້ເປັນປົກກະຕິ.

ມາດຕະຖານຄວາມປອດໄພ ແລະ ສຸຂານາໄມຂອງໂຮງງານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 31 ມາດຕະການແກ້ໄຂການເກີດອຸປະຕິເຫດຢູ່ໃນໂຮງງານ**

ໃນກໍລະນີໂຮງງານມີອຸປະຕິເຫດເກີດຂຶ້ນ ເຮັດໃຫ້ລະບົບການຜະລິດເສັຍຫາຍ ແລະ ເປ່ເພ, ເຮັດໃຫ້ຄົນບາດເຈັບ ຫຼື ເສັຍຊີວິດ ຜູ້ດຳເນີນກິດຈະການໂຮງງານ ຕ້ອງແຈ້ງຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ພາກສ່ວນທີ່ກ່ຽວຂ້ອງຊາບໂດຍທັນທີ ແລະ ຕ້ອງແກ້ໄຂຕາມມາດຕະການດັ່ງນີ້:

1. ໃນກໍລະນີເກີດອຸປະຕິເຫດ ເຮັດໃຫ້ຄົນເສັຍຊີວິດ ຫຼື ບາດເຈັບຮ້າຍແຮງ ໃຫ້ຢຸດເຄື່ອງຈັກຢູ່ຂອດການຜະລິດທີ່ພາໃຫ້ເກີດອຸປະຕິເຫດ ຈົນກວ່າຈະມີການສືບສວນສອບສວນຫາສາເຫດຂອງການເສັຍຊີວິດ. ຜູ້ດຳເນີນກິດຈະການໂຮງງານ ຕ້ອງຮັບຜິດຊອບຕໍ່ຜົນເສຍຫາຍທັງໝົດທີ່ເກີດຂຶ້ນ ລວມທັງຮັບຜິດຊອບຕໍ່ຜູ້ເສັຍຊີວິດ ແລະ ຜູ້ບາດເຈັບ ຕາມລະບຽບກົດໝາຍ ທີ່ກ່ຽວຂ້ອງໄດ້ກຳນົດໄວ້.

2. ໃນກໍລະນີມີອຸປະຕິເຫດເກີດຂຶ້ນ ເຮັດໃຫ້ໂຮງງານຢຸດເຊົາເກີນກວ່າ 7 ວັນຂຶ້ນໄປ ຜູ້ດຳເນີນກິດຈະການໂຮງງານ ຕ້ອງແຈ້ງຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ພາກສ່ວນທີ່ກ່ຽວຂ້ອງ ຊາບພາຍໃນ 15 ວັນ ນັບແຕ່ມື້ໂຮງງານໄດ້ຢຸດເຊົາ. ພາຍຫຼັງປັບປຸງແກ້ໄຂອຸປະຕິເຫດທີ່ເກີດຂຶ້ນ ແລະ ສາມາດດຳເນີນການຜະລິດໄດ້ແລ້ວ ຕ້ອງແຈ້ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ລົງກວດກາ ແລະ ຢັ້ງຢືນທາງດ້ານເຕັກນິກກ່ອນ ຈຶ່ງສາມາດດຳເນີນການຜະລິດຄືນໃໝ່ໄດ້.

## ໝວດທີ 4
## ການປ່ຽນແປງກິດຈະການໂຮງງານ

**ມາດຕາ 32 ການປ່ຽນແປງກິດຈະການໂຮງງານ**

ການປ່ຽນແປງກິດຈະການໂຮງງານ ປະກອບມີດັ່ງນີ້:

1. ການຂະຫຍາຍໂຮງງານ;
2. ການຍົກຍ້າຍໂຮງງານ;
3. ການຍົກຍ້າຍເຄື່ອງຈັກ;
4. ການໂອນ, ການໃຫ້ເຊົ່າ ຫຼື ຂາຍ ກິດຈະການໂຮງງານ;
5. ການສືບທອດການດຳເນີນກິດຈະການໂຮງງານ;
6. ການປ່ຽນຊື່ໂຮງງານ ຫຼື ປ່ຽນຜູ້ດຳເນີນກິດຈະການໂຮງງານ.

**ມາດຕາ 33 ການຂະຫຍາຍໂຮງງານ**

ການຂະຫຍາຍໂຮງງານ ມີ 3 ຮູບການຄື: ການເພີ່ມເຄື່ອງຈັກ, ການເພີ່ມເນື້ອທີ່ອາຄານຜະລິດຂອງໂຮງງານ ແລະ ການເພີ່ມທັງສອງຢ່າງພ້ອມກັນ.

ການຂະຫຍາຍໂຮງງານ ດ້ວຍການເພີ່ມອາຄານທີ່ບໍ່ແມ່ນອາຄານຜະລິດ, ສາງວັດຖຸດິບ, ສາງຜະລິດຕະພັນ ຫຼື ຫ້ອງການບໍລິຫານອື່ນໆ ບໍ່ຖືວ່າເປັນການຂະຫຍາຍ ແຕ່ຕ້ອງປະຕິບັດໃຫ້ຖືກຕ້ອງຕາມລະບຽບການກ່ຽວກັບການປຸກສ້າງ.

ຜູ້ດຳເນີນກິດຈະການໂຮງງານ ສາມາດຂະຫຍາຍໂຮງງານຢູ່ໃນສະຖານທີ່ດຽວກັນໄດ້ ແຕ່ຕ້ອງປະຕິບັດຕາມຂັ້ນຕອນຄືກັນກັບການຂໍດຳເນີນກິດຈະການໂຮງງານ ໃນສ່ວນທີ່ຂະຫຍາຍ.

**ມາດຕາ 34 ການຂະຫຍາຍໂຮງງານ ໂດຍການເພີ່ມເຄື່ອງຈັກ**

ການຂະຫຍາຍໂຮງງານ ໂດຍການເພີ່ມເຄື່ອງຈັກ ມີ 2 ກໍລະນີ ດັ່ງນີ້:

ກໍລະນີທີ 1: ໂຮງງານທີ່ມີກຳລັງແຮງຂອງເຄື່ອງຈັກລວມ ທີ່ອະນຸມັດໃນເບື້ອງຕົ້ນບໍ່ເກີນ 100 ແຮງມ້າ, ຖ້າໂຮງງານເພີ່ມກຳລັງແຮງຂອງເຄື່ອງຈັກ ຕັ້ງແຕ່ 50% ຂຶ້ນໄປ ຖືວ່າເປັນການຂະຫຍາຍ;

ກໍລະນີທີ 2: ໂຮງງານທີ່ມີກຳລັງແຮງຂອງເຄື່ອງຈັກລວມ ທີ່ອະນຸມັດໃນເບື້ອງຕົ້ນເກີນກວ່າ 100 ແຮງມ້າ, ຖ້າໂຮງງານເພີ່ມກຳລັງແຮງຂອງເຄື່ອງຈັກ ຕັ້ງແຕ່ 50 ແຮງມ້າຂຶ້ນໄປ ຖືວ່າເປັນການຂະຫຍາຍ.

**ມາດຕາ 35 ການຂະຫຍາຍໂຮງງານ ໂດຍການເພີ່ມເນື້ອທີ່ອາຄານ**

ການຂະຫຍາຍໂຮງງານ ໂດຍການເພີ່ມເນື້ອທີ່ອາຄານ ຫຼື ກໍ່ສ້າງອາຄານຜະລິດເພີ່ມໃໝ່ ຢູ່ໃນຂອບເຂດພື້ນທີ່ດຽວກັນ ມີ 2 ກໍລະນີ ດັ່ງນີ້:

ກໍລະນີທີ 1: ອາຄານຜະລິດຂອງໂຮງງານທີ່ມີເນື້ອທີ່ລວມ ທີ່ອະນຸມັດໃນເບື້ອງຕົ້ນບໍ່ເກີນ 200 ຕາແມັດ, ຖ້າເພີ່ມເນື້ອທີ່ ຕັ້ງແຕ່ 50% ຂຶ້ນໄປ ຖືວ່າເປັນການຂະຫຍາຍ;

ກໍລະນີທີ 2: ອາຄານຜະລິດຂອງໂຮງງານທີ່ມີເນື້ອທີ່ລວມ ທີ່ອະນຸມັດໃນເບື້ອງຕົ້ນເກີນກວ່າ 200 ຕາແມັດ, ຖ້າເພີ່ມເນື້ອທີ່ ຕັ້ງແຕ່ 100 ຕາແມັດຂຶ້ນໄປ ຖືວ່າເປັນການຂະຫຍາຍ.

**ມາດຕາ 36 ການດຳເນີນກິດຈະການໃນສ່ວນຂະຫຍາຍໂຮງງານ**

ພາຍຫຼັງທີ່ໄດ້ຂະຫຍາຍໂຮງງານສຳເລັດ ໂດຍຖືກຕ້ອງຕາມລະບຽບກົດໝາຍ ແລ້ວຜູ້ດຳເນີນກິດຈະການໂຮງງານ ຕ້ອງປະກອບໃບຄຳຮ້ອງຂໍຂະຫຍາຍໂຮງງານ ຕາມແບບພິມ ຮ/ງ 1 ເພື່ອປ່ຽນແປງເນື້ອໃນໃບຢັ້ງຢືນການດຳເນີນກິດຈະການໂຮງງານ ໃຫ້ສອດຄ່ອງກັບການຂະຫຍາຍໂຮງງານ. ຂັ້ນຕອນການພິຈາລະນາໃຫ້ປະຕິບັດດັ່ງນີ້:

1. ຂັ້ນຕອນການພິຈາລະນາຂະຫຍາຍໂຮງງານ ໃຫ້ປະຕິບັດຄືກັນກັບຂັ້ນຕອນການສະເໜີອອກໃບຢັ້ງຢືນດຳເນີນກິດຈະການໂຮງງານ ຕາມມາດຕາ 13, 14, 15 ແລະ ມາດຕາ 16 ຂອງຂໍ້ຕົກລົງສະບັບນີ້. ອາຍຸໃບຢັ້ງຢືນດຳເນີນກິດຈະການສ່ວນຂະຫຍາຍ ໃຫ້ກຳນົດເອົາຕາມອາຍຸໃບຢັ້ງຢືນດຳເນີນກິດຈະການໂຮງງານ.

2. ການຂະຫຍາຍໂຮງງານ ຖ້າມີການເພີ່ມ ຫຼື ຫຼຸດທຶນ, ເພີ່ມ ຫຼື ຫຼຸດກິດຈະການຜະລິດ ຜູ້ດຳເນີນກິດຈະການໂຮງງານ ຕ້ອງສະເໜີປ່ຽນແປງເນື້ອໃນໃບອະນຸຍາດລົງທຶນ ຫຼື ໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ ແລ້ວຈຶ່ງສະເໜີປ່ຽນແປງເນື້ອໃນໃບຢັ້ງຢືນດຳເນີນກິດຈະການໂຮງງານ;

3. ກໍລະນີເພີ່ມເຄື່ອງຈັກ ຫຼື ເພີ່ມເນື້ອທີ່ອາຄານຜະລິດຂອງໂຮງງານ ແຕ່ບໍ່ເຖິງຂັ້ນຂະຫຍາຍຕາມທີ່ກຳນົດໄວ້ໃນມາດຕາ 34 ແລະ ມາດຕາ 35 ຂອງຂໍ້ຕົກລົງສະບັບນີ້, ຜູ້ດຳເນີນກິດຈະການໂຮງງານ ຕ້ອງລາຍງານຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຊາບ.

**ມາດຕາ 37 ການຍົກຍ້າຍໂຮງງານ**

ຜູ້ດຳເນີນກິດຈະການໂຮງງານ ສາມາດຍົກຍ້າຍໂຮງງານໄປຕັ້ງຢູ່ສະຖານທີ່ອື່ນໄດ້ ແຕ່ຕ້ອງດັດແກ້ບັນດາເອກະສານທີ່ກ່ຽວຂ້ອງກັບການສ້າງຕັ້ງ ແລະ ດຳເນີນກິດຈະການໂຮງງານ ຢູ່ສະຖານທີ່ໃໝ່. ໃນນີ້ ສະຖານທີ່ຕັ້ງໂຮງງານບ່ອນໃໝ່ ຕ້ອງປະຕິບັດເງື່ອນໄຂດ້ານທີ່ຕັ້ງໂຮງງານ ຕາມມາດຕາ 7 ແລະ ການສະເໜີອອກໃບຢັ້ງຢືນດຳເນີນກິດຈະການໂຮງງານ ຕາມມາດຕາ 13 ຂອງຂໍ້ຕົກລົງສະບັບນີ້. ໃນນີ້, ກ່ອນຍົກຍ້າຍໂຮງງານ ຕ້ອງສະເໜີຂໍຢຸດເຊົາ ແລະ ຍຸບເລີກໂຮງງານຫຼັງເດີມ ຕາມມາດຕາ 19 ຂໍ້ 2 ຂອງຂໍ້ຕົກລົງສະບັບນີ້ ຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ.

**ມາດຕາ 38 ການຍົກຍ້າຍເຄື່ອງຈັກ**

ຜູ້ດຳເນີນກິດຈະການໂຮງງານ ສາມາດຍົກຍ້າຍເຄື່ອງຈັກໄປສະຖານທີ່ໂຮງງານອື່ນໄດ້ ຊຶ່ງມີ 2 ຮູບການຄື: ການຍົກຍ້າຍເຄື່ອງຈັກຊົ່ວຄາວ ແລະ ການຍົກຍ້າຍເຄື່ອງຈັກຖາວອນ ໂດຍປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການຍົກຍ້າຍເຄື່ອງຈັກບາງສ່ວນຢູ່ພາຍໃນໂຮງງານ ໄປຍັງສະຖານທີ່ອື່ນເປັນການຊົ່ວຄາວ ໃຫ້ຍື່ນໃບສະເໜີຂໍຍົກຍ້າຍເຄື່ອງຈັກ ຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ພ້ອມທັງລະບຸເຫດຜົນຂອງການຍົກຍ້າຍ ຕາມແບບພິມ ຣ/ງ 13, ຄັດຕິດລາຍການເຄື່ອງຈັກ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງກັບການຍົກຍ້າຍດັ່ງກ່າວ. ການຍົກຍ້າຍເຄື່ອງຈັກຊົ່ວຄາວຕ້ອງເອົາກັບຄືນພາຍໃນ 1 ປີ ນັບແຕ່ວັນທີ່ໄດ້ຮັບອະນຸຍາດເປັນຕົ້ນໄປ. ກໍລະນີຫາກມີຄວາມຈຳເປັນຕ້ອງການນຳໃຊ້ເກີນ 1 ປີ ສາມາດສະເໜີຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ໂດຍຊີ້ແຈງເຫດຜົນໃຫ້ລະອຽດເພື່ອຂໍຕໍ່ກຳນົດເວລາ, ແຕ່ສູງສຸດກໍ່ໄດ້ບໍ່ເກີນ 1 ປີ, ພ້ອມນີ້ ຕ້ອງລະບຸເງື່ອນໄຂ ຫຼື ວິທີການ ເພື່ອຮັບປະກັນຄວາມປອດໄພໃນການຂົນສົ່ງ.

2. ການຍົກຍ້າຍເຄື່ອງຈັກຖາວອນ ໃນກໍລະນີໃດໜຶ່ງ ເປັນຕົ້ນ ເຄື່ອງຈັກເປ່ເພ ແລະ ນຳໃຊ້ບໍ່ໄດ້, ຂາຍ ຫຼື ໂອນໃຫ້ບຸກຄົນອື່ນ ຊຶ່ງມີຄວາມຈຳເປັນຕ້ອງຮື້ຖອນອອກຈາກໂຮງງານໄປບ່ອນອື່ນ ຕ້ອງລາຍງານຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຊາບ ພ້ອມທັງລະບຸເຫດຜົນຂອງການຍົກຍ້າຍ ແລະ ຂັດຕິດ ລາຍການເຄື່ອງຈັກ ເພື່ອລົງກວດກາກ່ອນຮື້ຖອນ ແລະ ໃນນັ້ນຕ້ອງດັດແກ້ລາຍການເຄື່ອງຈັກເດີມ ແລະ ແຜນຜັງການຕິດຕັ້ງເຄື່ອງຈັກຄືນໃໝ່ ພາຍໃນ 15 ວັນ.

**ມາດຕາ 39 ການໂອນ, ການໃຫ້ເຊົ່າ ຫຼື ຂາຍ ກິດຈະການໂຮງງານ**

ໃນກໍລະນີມີການ ໂອນ, ໃຫ້ເຊົ່າ ຫຼື ຂາຍກິດຈະການໂຮງງານໃຫ້ຜູ້ອື່ນ ພາຍຫຼັງສິ້ນສຸດຂັ້ນຕອນ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ ທີ່ກ່ຽວຂ້ອງແລ້ວ ຜູ້ດຳເນີນກິດຈະການໂຮງງານຜູ້ເກົ່າ ຕ້ອງລາຍງານໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ຊາບພາຍໃນ 15 ວັນ ນັບແຕ່ມື້ໄດ້ເຊັນສັນຍາການໂອນ, ໃຫ້ເຊົ່າ ຫຼື ຂາຍກິດຈະການໂຮງງານເປັນຕົ້ນໄປ.

ຜູ້ໄດ້ຮັບການໂອນ, ຜູ້ເຊົ່າ ຫຼື ຜູ້ຊື້ກິດຈະການໂຮງງານນັ້ນ ຕ້ອງຍື່ນຄຳຮ້ອງ ຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຫຼື ຂະແໜງການແຜນການ ແລະ ການລົງທຶນ ເພື່ອຂໍປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ຫຼື ໃບ

ອະນຸຍາດການລົງທຶນ, ໃບອະນຸຍາດດຳເນີນທຸລະກິດ ແລະ ໃບຢັ້ງຢືນດຳເນີນກິດຈະການໂຮງງານ ໂດຍປ່ຽນຊື່ຜູ້ດຳເນີນກິດຈະການໂຮງງານ ຈາກເຈົ້າຂອງເດີມມາເປັນ ຜູ້ໄດ້ຮັບໂອນ, ຜູ້ເຊົ່າ ຫຼື ຜູ້ຊື້ກິດຈະການ ພາຍໃນ 30 ວັນ ນັບແຕ່ມື້ໄດ້ເຊັນສັນຍາໂອນ, ເຊົ່າ ຫຼື ຊື້ກິດຈະການດັ່ງກ່າວ.

**ມາດຕາ 40 ການສືບທອດການດຳເນີນກິດຈະການໂຮງງານ**

ໃນກໍລະນີຜູ້ດຳເນີນກິດຈະການໂຮງງານຫາກເສຍຊີວິດ, ຜູ້ມີສິດສືບທອດ ຫຼື ຜູ້ໄດ້ຮັບສິດຄອບຄອງຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ຕ້ອງລາຍງານເປັນລາຍລັກອັກສອນ ໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ຊາບພາຍໃນ 60 ວັນ ນັບແຕ່ວັນທີ່ຜູ້ດຳເນີນກິດຈະການໂຮງງານ ໄດ້ເສຍຊີວິດ ແລະ ສະເໜີຂໍປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດລົງທຶນ, ໃບອະນຸຍາດດຳເນີນທຸລະກິດ ແລະ ໃບຢັ້ງຢືນດຳເນີນກິດຈະການໂຮງງານ ໂດຍປ່ຽນຊື່ຈາກຜູ້ດຳເນີນກິດຈະການຜູ້ເກົ່າ ເປັນຊື່ຜູ້ທີ່ໄດ້ຮັບສິດສືບທອດ.

ພາຍຫຼັງຜູ້ດຳເນີນກິດຈະການໂຮງງານໄດ້ເສຍຊີວິດເກີນ 90 ວັນ ຫາກບໍ່ມີຜູ້ສະເໜີຂໍສືບທອດ ຖືວ່າໃບຢັ້ງຢືນດຳເນີນກິດຈະການໂຮງງານນັ້ນ ໄດ້ໝົດອາຍຸລົງພ້ອມກັບການເສຍຊີວິດຂອງຜູ້ດຳເນີນກິດຈະການໂຮງງານ. ຖ້າຫາກຜູ້ສືບທອດກິດຈະການ ຈະດຳເນີນກິດຈະການໂຮງງານຄືນໃໝ່ ພາຍຫຼັງໝົດກຳນົດເວລາທີ່ລະບຸໄວ້ ໃຫ້ປະຕິບັດຕາມຂັ້ນຕອນຄືກັນກັບການຂໍດຳເນີນກິດຈະການໂຮງງານໃໝ່.

**ມາດຕາ 41 ການປ່ຽນຊື່ໂຮງງານ ຫຼື ປ່ຽນຜູ້ດຳເນີນກິດຈະການໂຮງງານ**

ການດຳເນີນກິດຈະການໂຮງງານ ສາມາດປ່ຽນຊື່ໂຮງງານ ຫຼື ປ່ຽນຜູ້ດຳເນີນກິດຈະການໂຮງງານໄດ້ ແຕ່ຕ້ອງສະເໜີຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຫຼື ຂະແໜງການແຜນການ ແລະ ການລົງທຶນ ເພື່ອຂໍປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດລົງທຶນ, ໃບອະນຸຍາດດຳເນີນທຸລະກິດ ແລະ ໃບຢັ້ງຢືນດຳເນີນກິດຈະການໂຮງງານ ຕາມການແບ່ງຂັ້ນຄຸ້ມຄອງ.

## ພາກທີ III
## ການກວດກາໂຮງງານ

**ມາດຕາ 42 ການກວດກາໂຮງງານ**

ການກວດກາໂຮງງານ ແມ່ນການກວດກາສະພາບເຕັກນິກຂອງອາຄານໂຮງງານ, ການຕິດຕັ້ງເຄື່ອງຈັກ, ຂະບວນການຜະລິດ, ຄວາມປອດໄພ, ສຸຂານາໄມໂຮງງານ, ຄວາມປອດໄພແຮງງານ ແລະ ການນຳໃຊ້ແຮງງານ, ກວດກາຜະລິດຕະພັນໂຮງງານ, ກວດກາລະບົບ ກຳຈັດ ແລະ ບຳບັດສິ່ງເສດເຫຼືອ ແລະ ການປ້ອງກັນຜົນກະທົບຕໍ່ສິ່ງແວດລ້ອມ ລວມທັງການປະຕິບັດສິດ ແລະ ພັນທະຂອງຜູ້ດຳເນີນກິດຈະການໂຮງງານ ຕາມມາດຕາ 67 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013.

**ມາດຕາ 43 ຮູບການກວດກາໂຮງງານ**

ການກວດກາໂຮງງານ ໄດ້ກຳນົດເປັນສາມຮູບການ ດັ່ງນີ້:

1. ການກວດກາ ຕາມລະບົບປົກກະຕິ;
2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາ ແບບກະທັນຫັນ.

ການກວດກາ ສາມາດດຳເນີນການກວດກາດ້ານເອກະສານ ແລະ ການປະຕິບັດຕົວຈິງ ຢູ່ສະຖານທີ່ປະຕິບັດງານ ແລະ ເຈົ້າໜ້າທີ່ກວດກາໂຮງງານ ຕ້ອງປະຕິບັດຕາມລະບຽບກົດໝາຍຢ່າງເຂັ້ມງວດ.

**ມາດຕາ 44 ການກວດກາ ຕາມລະບົບປົກກະຕິ**

ການກວດກາຕາມລະບົບປົກກະຕິ ແມ່ນການກວດກາຕາມແຜນການ, ກວດກາຕາມຂັ້ນຕອນ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງປະກອບດ້ວຍການກວດກາກ່ອນການສ້າງຕັ້ງ, ການດຳເນີນກິດຈະການ, ການຕໍ່ອາຍຸ, ການຂະຫຍາຍໂຮງງານ ແລະ ການສິ້ນສຸດກິດຈະການໂຮງງານ.

1. ການກວດກາກ່ອນການສ້າງຕັ້ງໂຮງງານ ແມ່ນການກວດກາສະຖານທີ່ຕັ້ງ ເພື່ອຢັ້ງຢືນຄວາມຖືກຕ້ອງຕາມທີ່ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

2. ການກວດກາໄລຍະການສ້າງຕັ້ງໂຮງງານ ແມ່ນການກວດກາຕິດຕາມ ໄລຍະການກໍ່ສ້າງໂຮງງານ ເພື່ອໃຫ້ເປັນໄປຕາມແຜນທີ່ກຳນົດໄວ້ໃນບົດວິພາກເສດຖະກິດ-ເຕັກນິກ ແລະ ລະບົບມາດຕະຖານເຕັກນິກຕ່າງໆ ຕາມແຜນຜັງຂອງການກໍ່ສ້າງໂຮງງານ.

3. ການກວດກາການດຳເນີນກິດຈະການໂຮງງານ ແລະ ຕໍ່ອາຍຸດຳເນີນ ແມ່ນການກວດກາ ເພື່ອຢັ້ງຢືນຄວາມຖືກຕ້ອງຂອງການກໍ່ສ້າງ ແລະ ການຕິດຕັ້ງເຄື່ອງຈັກຕົວຈິງ ກັບເອກະສານທີ່ໄດ້ສະເໜີຂໍດຳເນີນກິດຈະການໂຮງງານ ແລະ ບົດວິພາກເສດຖະກິດ-ເຕັກນິກໂຮງງານ.

ການກວດກາການດຳເນີນກິດຈະການໂຮງງານ ແມ່ນປະຕິບັດພາຍຫຼັງທີ່ໂຮງງານໄດ້ກໍ່ສ້າງໂຮງງານ, ຕິດຕັ້ງເຄື່ອງຈັກ, ທຳການຜະລິດທົດລອງແລ້ວ ແລະ ພາຍຫຼັງຜູ້ປະກອບການໂຮງງານ ໄດ້ຍື່ນຄຳຮ້ອງຂໍດຳເນີນກິດຈະການໂຮງງານ ພ້ອມດ້ວຍເອກະສານທີ່ກ່ຽວຂ້ອງ ຄົບຖ້ວນ ແລະ ຖືກຕ້ອງ ຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ.

ການກວດກາການຕໍ່ອາຍຸດຳເນີນກິດຈະການໂຮງງານ ແມ່ນການກວດກາ ເພື່ອຢັ້ງຢືນຄືນມາດຕະຖານເຕັກນິກໂຮງງານ ແລະ ສະພາບການເຄື່ອນໄຫວຂອງໂຮງງານ ໃນໄລຍະຜ່ານມາ.

4. ການກວດກາການຂະຫຍາຍໂຮງງານ ແມ່ນການກວດກາ ສ່ວນທີ່ຂະຫຍາຍເພີ່ມ ຕາມແຕ່ລະກໍລະນີທີ່ກຳນົດໄວ້ໃນມາດຕາ 34, 35 ແລະ ມາດຕາ 36 ຂອງຂໍ້ຕົກລົງສະບັບນີ້ ເພື່ອຮັບຮູ້ ແລະ ຢັ້ງຢືນຄວາມຖືກຕ້ອງໃນສ່ວນທີ່ຂະຫຍາຍໂຮງງານ.

ການລົງກວດກາການຂະຫຍາຍໂຮງງານ ແມ່ນປະຕິບັດ ພາຍຫຼັງທີ່ຜູ້ດຳເນີນກິດຈະການໂຮງງານ ໄດ້ຍື່ນຄຳຮ້ອງຂໍຂະຫຍາຍໂຮງງານ ຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ.

5. ການກວດກາການຢຸດເຊົາກິດຈະການໂຮງງານ ແມ່ນການກວດກາ ພາຍຫຼັງທີ່ໄດ້ຮັບແຈ້ງໃຫ້ຢຸດເຊົາຊົ່ວຄາວ ຫຼື ຢຸດເຊົາຖາວອນ ລວມທັງການແຈ້ງຖອນໃບຢັ້ງຢືນດຳເນີນກິດຈະການໂຮງງານ ໂດຍກວດກາປະເມີນຄືນສະພາບການເຄື່ອນໄຫວ, ການປະຕິບັດສິດ ແລະ ພັນທະຂອງໂຮງງານ ແລະ ການປົກປັກຮັກສາສິ່ງແວດລ້ອມໂຮງງານ ລວມທັງການກຳຈັດສິ່ງເສດເຫຼືອ ທີ່ເປັນອັນຕະລາຍ ແລະ ບໍ່ເປັນອັນຕະລາຍ.

6. ການກວດກາປົກກະຕິຕາມແຜນ ແມ່ນການກວດກາ ພາຍຫຼັງທີ່ໂຮງງານໄດ້ດຳເນີນກິດຈະການເປັນປົກກະຕິ ໃນແຕ່ລະໄລຍະຕາມສິດ ແລະ ໜ້າທີ່ ທີ່ກຳນົດໄວ້ໃນມາດຕາ 62, 63 ແລະ ມາດຕາ 64 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013 ໂດຍກວດກາສະພາບການເຄື່ອນໄຫວຂອງໂຮງງານ ແລະ ມາດຕະຖານເຕັກນິກໂຮງງານ, ການນຳເຂົ້າວັດຖຸດິບ, ອຸປະກອນການຜະລິດ, ຜະລິດຕະພັນໂຮງງານ, ຄວາມປອດໄພ, ສຸຂານາໄມໂຮງງານ, ການນຳໃຊ້ແຮງງານ ແລະ ສິ່ງແວດລ້ອມໂຮງງານ.

ການກວດກາປົກກະຕິ ຕ້ອງສ້າງແຜນລົງກວດກາ ໂດຍກຳນົດວັນເວລາຢ່າງຈະແຈ້ງ ແລະ ຕ້ອງໄດ້ປະຕິບັດເປັນປະຈຳ ຢ່າງໜ້ອຍໂຮງງານລະ 1 ຄັ້ງຕໍ່ປີ. ກ່ອນລົງກວດກາຕ້ອງແຈ້ງໃຫ້ຜູ້ດຳເນີນກິດຈະການໂຮງງານ ຊາບກ່ອນລ່ວງໜ້າຢ່າງຊ້າ 1 ວັນກ່ອນມື້ລົງກວດກາ ພ້ອມທັງເຮັດບົດບັນທຶກກວດກາ ຕາມແບບພິມ ຮ/ງ 9.

**ມາດຕາ 45 ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ**

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດກາໃນແຜນ ຫຼື ນອກແຜນ, ກ່ອນລົງກວດ

ກາແຕ່ລະຄັ້ງ ຕ້ອງແຈ້ງໃຫ້ເປົ້າໝາຍທີ່ຈະລົງກວດກາຮັບຊາບກ່ອນລ່ວງໜ້າ ຢ່າງໜ້ອຍ 1 ວັນ.

ການກວດກາມອກແຜນ ແມ່ນການກວດກາ ກໍລະນີທີ່ເຫັນວ່າມີຄວາມຈໍາເປັນ ຫຼື ຕາມຄໍາສັ່ງ ທີ່ຕ້ອງໄດ້ລົງກວດກາ ເຊັ່ນ: ການສ້າງຕັ້ງໂຮງງານ, ການຂະຫຍາຍໂຮງງານ ຫຼື ການເຄື່ອນໄຫວກິດຈະການໂຮງງານ ໂດຍທີ່ບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການອຸດສາຫະກໍາ ແລະ ການຄ້າ.

**ມາດຕາ 46 ການກວດກາແບບກະທັນຫັນ**

ການກວດກາແບບກະທັນຫັນ ແມ່ນການກວດກາ ໃນເວລາທີ່ເຫັນວ່າມີຄວາມຈໍາເປັນ ແລະ ຮີບດ່ວນເປັນຕົ້ນ ໃນກໍລະນີມີຄໍາສັ່ງຊີ້ນໍາຂອງຂັ້ນເທິງ, ຕາມແຫຼ່ງຂ່າວ, ຕາມການສະເໜີ, ຕາມການຮ້ອງຟ້ອງຂອງບຸກຄົນຫຼື ການຈັດຕັ້ງ ກ່ຽວກັບບັນຫາຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ສົງໄສວ່າອາດກໍ່ໃຫ້ເກີດບັນຫາທີ່ເປັນຜົນກະທົບຕໍ່ເສດຖະກິດ ແລະ ສັງຄົມ, ການເຄື່ອນໄຫວຂອງໂຮງງານບໍ່ຖືກຕ້ອງຕາມເປົ້າໝາຍຂອງການອະນຸຍາດ, ເຄື່ອນໄຫວຜິດຕໍ່ລະບຽບກົດໝາຍ, ເກີດອຸປະຕິເຫດແຮງງານ, ເກີດອັກຄີໄພ ມີຜົນເສັຍຫາຍຮ້າຍແຮງຕໍ່ຊີວິດ ແລະ ຊັບສິນ.

ການກວດກາແບບກະທັນຫັນນີ້ ແມ່ນລົງກວດກາໄດ້ທຸກເວລາ ໂດຍທີ່ບໍ່ໄດ້ແຈ້ງໃຫ້ຜູ້ດໍາເນີນກິດຈະການໂຮງງານຊາບ ພ້ອມທັງເຮັດບົດບັນທຶກກວດກາ ຕາມແບບພິມ ຣ/ງ 10.

**ມາດຕາ 47 ຜູ້ລົງກວດກາໂຮງງານ**

ຜູ້ທີ່ມີສິດລົງກວດກາໂຮງງານ ຕາມມາດຕາ 44, 45 ແລະ ມາດຕາ 46 ຂອງຂໍ້ຕົກລົງສະບັບນີ້ ແມ່ນເຈົ້າໜ້າທີ່ກວດກາໂຮງງານຂອງຂະແໜງການອຸດສາຫະກໍາ ແລະ ການຄ້າ ທີ່ຖືກແຕ່ງຕັ້ງໃຫ້ເປັນເຈົ້າໜ້າທີ່ກວດກາໂຮງງານ ຫຼື ຜູ້ທີ່ມີຄວາມຮັບຜິດຊອບວຽກງານຄຸ້ມຄອງອຸດສາຫະກໍາ ແລະ ຫັດຖະກໍາ. ລາຍລະອຽດໄດ້ກໍານົດໄວ້ໃນຂໍ້ຕົກລົງ ວ່າດ້ວຍເຈົ້າໜ້າທີ່ກວດກາໂຮງງານ.

## ພາກທີ IV
## ສິດ ແລະ ພັນທະຂອງຜູ້ດໍາເນີນກິດຈະການໂຮງງານ

**ມາດຕາ 48 ສິດຂອງຜູ້ດໍາເນີນກິດຈະການໂຮງງານ**

ຜູ້ດໍາເນີນກິດຈະການໂຮງງານ ມີສິດດັ່ງນີ້:

1. ເປັນເຈົ້າກໍາມະສິດໂຮງງານ ແລະ ຜົນປະໂຫຍດທີ່ໄດ້ຮັບຈາກການດໍາເນີນກິດຈະການໂຮງງານ;
2. ກໍ່ສ້າງສິ່ງປຸກສ້າງ ແລະ ຕິດຕັ້ງເຄື່ອງຈັກ, ອຸປະກອນຕ່າງໆ ເພື່ອການດໍາເນີນກິດຈະການໂຮງງານ ຕາມລະບຽບກົດໝາຍຂອງຂະແໜງການທີ່ກ່ຽວຂ້ອງ;
3. ເຄື່ອນໄຫວດໍາເນີນກິດຈະການ ຕາມຂອບເຂດທີ່ໄດ້ຮັບອະນຸຍາດໃນໃບຢັ້ງຢືນດໍາເນີນກິດຈະການໂຮງງານ;
4. ສາມາດໄດ້ຮັບນະໂຍບາຍ, ການສົ່ງເສີມ, ການຊ່ວຍເຫຼືອ, ການແນະນໍາ ຈາກພາກລັດ ແລະ ພາກສ່ວນອື່ນ ທາງດ້ານວິຊາການ ແລະ ເຕັກໂນໂລຊີ ກ່ຽວກັບການດໍາເນີນກິດຈະການໂຮງງານ;
5. ໃຫ້ເຊົ່າ, ໂອນ, ມອບ, ສືບທອດ, ຊື້, ຂາຍ, ຂະຫຍາຍ, ຕໍ່ອາຍຸໃບຢັ້ງຢືນດໍາເນີນກິດຈະການໂຮງງານ ແລະ ຢຸດເຊົາກິດຈະການໂຮງງານ ຕາມລະບຽບການ;
6. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຕົນ ຕາມກົດໝາຍ;
7. ປະຕິບັດສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ ທີ່ກ່ຽວຂ້ອງ.

**ມາດຕາ 49 ພັນທະຂອງຜູ້ດຳເນີນກິດຈະການໂຮງງານ**

ຜູ້ດຳເນີນກິດຈະການໂຮງງານ ມີພັນທະດັ່ງນີ້:

1. ສ້າງຕັ້ງ ແລະ ດຳເນີນກິດຈະການໂຮງງານ ຕາມມາດຕະຖານເຕັກນິກ ແລະ ໃບຢັ້ງຢືນດຳເນີນກິດຈະການໂຮງງານ;

2. ເສຍພາສີ, ອາກອນ, ພັນທະ ແລະ ຄ່າທຳນຽມອື່ນ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນກຳນົດເວລາ;

3. ປະຕິບັດຕາມລະບຽບການກ່ຽວກັບການນຳໃຊ້ແຮງງານ ເປັນຕົ້ນ ຄ່າແຮງງານ, ໃຫ້ສະຫວັດດີການ, ອຸປະກອນປ້ອງກັນຄວາມປອດໄພຂອງຄົນງານ ແລະ ອື່ນໆ;

4. ສ້າງລະບົບການຄຸ້ມຄອງຄວາມປອດໄພພາຍໃນໂຮງງານ ໂດຍການສ້າງຕັ້ງໜ່ວຍງານຄຸ້ມຄອງ ຄວາມປອດໄພ, ສຸຂານາໄມ, ສິ່ງແວດລ້ອມ, ເຄມີ ແລະ ໄພພິບັດປະຈຳໂຮງງານ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ;

5. ລາຍງານການເກີດອຸປະຕິເຫດຂັ້ນຮ້າຍແຮງ ຢູ່ພາຍໃນໂຮງງານ ໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການທີ່ກ່ຽວຂ້ອງ;

6. ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ບ່ອນໂຮງງານຕັ້ງຢູ່ ເພື່ອຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ການຮັກສາສິ່ງແວດລ້ອມ;

7. ລາຍງານ ແລະ ສະໜອງຂໍ້ມູນກ່ຽວກັບການເຄື່ອນໄຫວໂຮງງານຂອງຕົນ ໃຫ້ການຈັດຕັ້ງລັດທີ່ກ່ຽວຂ້ອງ ຕາມລະບຽບກົດໝາຍ ໄດ້ກຳນົດໄວ້;

8. ແຈ້ງເຫດຜົນຂອງການຢຸດເຊົາຊົ່ວຄາວ, ຖາວອນ ຫຼື ການລົ້ມລະລາຍ ໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ຖ້າມີການຢຸດເຊົາ;

9. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ຂອງລັດ ໃນການຈັດຕັ້ງປະຕິບັດວຽກງານຕາມສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ລັດ;

10. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ທີ່ກ່ຽວຂ້ອງ ເປັນຕົ້ນ ງົບປະມານໃນການຕິດຕາມກວດກາ ຕາມມາດຕາ 67 ແລະ ມາດຕາ 68 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013.

## ພາກທີ V
## ຂໍ້ຫ້າມ

**ມາດຕາ 50 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳດັ່ງນີ້:

1. ອອກ ຫຼື ໂຈະ ຫຼື ຖອນ ໃບຢັ້ງຢືນດຳເນີນກິດຈະການໂຮງງານ ທີ່ບໍ່ຢູ່ພາຍໃຕ້ຄວາມຮັບຜິດຊອບ ຂອງຕົນ.

2. ສ້າງອຸປະສັກ, ສິ່ງກີດຂວາງ ຫຼື ຂັດຂວາງໃນທຸກຮູບແບບ ເກີນຂອບເຂດສິດ ແລະ ໜ້າທີ່ ຕໍ່ກັບວຽກງານສົ່ງເສີມ ແລະ ພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ.

3. ອະນຸຍາດທຸກຮູບແບບ ໃຫ້ໂຮງງານເຄື່ອນໄຫວກິດຈະການ ທີ່ບໍ່ມີໃບຢັ້ງຢືນດຳເນີນກິດຈະການໂຮງງານ ຫຼື ບໍ່ລາຍງານ ກ່ຽວກັບການດຳເນີນກິດຈະການໂຮງງານ ທີ່ຜິດກົດໝາຍ.

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

### ມາດຕາ 51 ຂໍ້ຫ້າມສຳລັບຜູ້ດຳເນີນກິດຈະການໂຮງງານ

ຫ້າມຜູ້ດຳເນີນກິດຈະການໂຮງງານ ມີພຶດຕິກຳດັ່ງນີ້:

1. ສ້າງຕັ້ງໂຮງງານ, ຍົກຍ້າຍໂຮງງານ, ດຳເນີນກິດຈະການໂຮງງານ ແລະ ຂະຫຍາຍໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດຕາມລະບຽບກົດໝາຍ ທີ່ກ່ຽວຂ້ອງ;
2. ຕິດຕັ້ງເຄື່ອງຈັກ, ຍົກຍ້າຍເຄື່ອງຈັກ ໂດຍບໍ່ໄດ້ຮັບອະນຸຍາດຕາມລະບຽບກົດໝາຍ ທີ່ກ່ຽວຂ້ອງ;
3. ຕັ້ງໂຮງງານຢູ່ໃນເຂດປ່າສະຫງວນ, ປ່າປ້ອງກັນ ຫຼື ເຂດຫວງຫ້າມທາງການ;
4. ໃຫ້ສິນບົນ;
5. ເຄື່ອນໄຫວກິດຈະການ ໂດຍບໍ່ສອດຄ່ອງກັບໃບຢັ້ງຢືນດຳເນີນກິດຈະການໂຮງງານ;
6. ນຳວັດຖຸດິບ, ເຄື່ອງຈັກ ຫຼື ແຮງງານທີ່ບໍ່ຖືກຕ້ອງຕາມກົດໝາຍເຂົ້າໂຮງງານ;
7. ນຳເຂົ້າ ຫຼື ນຳໃຊ້ທາດເຄມີອັນຕະລາຍ ໂດຍບໍ່ໄດ້ຮັບອະນຸຍາດ;
8. ຂັດຂວາງ ຫຼື ບໍ່ປະຕິບັດຕາມຄຳສັ່ງຂອງເຈົ້າໜ້າທີ່ ເປັນຕົ້ນ ຕັດກົ່ວ, ກະແຈ ຫຼື ໂສ້ ທີ່ເຈົ້າໜ້າທີ່ກວດກາໂຮງງານໄດ້ນຳໃຊ້ໜີບໃສ່ເຄື່ອງຈັກ ໃຫ້ຢຸດເຊົາການເຄື່ອນໄຫວ;
9. ປ່ຽນຊື່ໂຮງງານ, ໂອນ, ຂາຍ, ໃຫ້ເຊົ່າ ຫຼື ປ່ຽນຜູ້ດຳເນີນກິດຈະການໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການອຸດສາຫະກຳ ແລະ ການຄ້າ;
10. ປອມແປງເອກະສານ, ປົດບັງຂໍ້ມູນຄວາມຈິງ, ຂັດຂວາງ ຫຼື ບໍ່ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງ;
11. ປ່ອຍ ຫຼືຖິ້ມສິ່ງເສດເຫຼືອ ທີ່ບໍ່ໄດ້ຜ່ານຂະບວນການບຳບັດ ຫຼື ບຳບັດບໍ່ໄດ້ມາດຕະຖານຕາມລະບຽບການ;
12. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

### ມາດຕາ 52 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານ

ຫ້າມເຈົ້າໜ້າທີ່ ແລະ ພະນັກງານ ຂະແໜງການອຸດສາຫະກຳ ແລະ ການຄ້າ ມີພຶດຕິກຳດັ່ງນີ້:

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ, ສົມຮູ້ຮ່ວມຄິດ ຫຼື ມີວິທີການອື່ນທຸກຮູບແບບ;
2. ຮັບສິນບົນ;
3. ເມີນເສີຍຕໍ່ການລາຍງານ ກ່ຽວກັບໂຮງງານ ທີ່ເຄື່ອນໄຫວບໍ່ຖືກຕ້ອງຕາມລະບຽບກົດໝາຍ;
4. ເປີດເຜີຍເອກະສານລັບຂອງຊາດ, ຂອງລັດຖະການ ແລະ ຜູ້ປະກອບການໂຮງງານ;
5. ກົດໜ່ວງ, ຖ່ວງດຶງ ເອກະສານ ຫຼື ປອມແປງລາຍເຊັນຜູ້ມີອຳນາດ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ລະບຽບກົດໝາຍ.

## ພາກທີ VI
## ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 53 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍ ຫຼື ລົງໂທດທາງອາຍາ ຕາມແຕ່ລະກໍລະນີ.

### ມາດຕາ 54 ມາດຕະການກ່າວເຕືອນ ແລະ ສຶກສາອົບຮົມ

ຜູ້ດຳເນີນກິດຈະການໂຮງງານ ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້, ລະບຽບກົດໝາຍທີ່ກ່ຽວຂ້ອງ ເປັນຄັ້ງທີໜຶ່ງ ຈະຖືກກ່າວເຕືອນ ຫຼື ສຶກສາອົບຮົມ ຈາກເຈົ້າໜ້າທີ່ຂະແໜງການອຸດສາຫະກຳ ແລະ ການຄ້າ ໂດຍເຮັດບົດບັນທຶກກ່າວເຕືອນໄວ້ເປັນຫຼັກຖານ ຕາມແບບພິມ ຣ/ງ 11.

ມາດຕາ 55 ມາດຕະການປັບໃໝ

ຜູ້ດຳເນີນກິດຈະການໂຮງງານ ຫາກລະເມີດຂໍ້ຕົກລົງສະບັບນີ້ເປັນຄັ້ງທີສອງ ຈະຖືກປັບໃໝ ຕາມແຕ່ລະກໍລະນີດັ່ງນີ້:

| ກໍ ລະ ນີ | ເນື້ອໃນຂອງການລະເມີດ | ມູນຄ່າການປັບໃໝ (ກີບ) | | |
|---|---|---|---|---|
| | | ຣ/ງ ຂະໜາດນ້ອຍ 10- 50 ແຮງມ້າ ຫຼື 10-50 ຄົນ | ຣ/ງ ຂະໜາດກາງ 51- 200 ແຮງມ້າ ຫຼື 51-200 ຄົນ | ຣ/ງ ຂະໜາດໃຫຍ່ 201 ແຮງມ້າຂຶ້ນໄປ ຫຼື 201 ຄົນຂຶ້ນໄປ |
| 1. | ສ້າງຕັ້ງໂຮງງານ, ຍົກຍ້າຍໂຮງງານ, ດຳເນີນກິດຈະການໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການອຸດສາຫະກຳ ແລະ ການຄ້າ; | 5.000.000 | 10.000.000 | 15.000.000 |
| 2. | ຕັ້ງໂຮງງານຢູ່ໃນປ່າສະຫງວນ, ປ່າປ້ອງກັນ ຫຼື ເຂດຫວງຫ້າມທາງການ; | 5.000.000 | 10.000.000 | 15.000.000 |
| 3. | ຂະຫຍາຍໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດຕາມລະບຽບກົດໝາຍ ທີ່ກ່ຽວຂ້ອງ; | 3.000.000 | 5.000.000 | 8.000.000 |
| 4. | ຕິດຕັ້ງເຄື່ອງຈັກ, ຍົກຍ້າຍເຄື່ອງຈັກ ໂດຍບໍ່ໄດ້ຮັບອະນຸຍາດ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ; | 2.000.000 | 4.000.000 | 6.000.000 |
| 5. | ປ່ຽນຊື່ໂຮງງານ, ໂອນ, ຂາຍ, ໃຫ້ເຊົ່າ ຫຼືປ່ຽນຜູ້ດຳເນີນກິດຈະການໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການອຸດສາຫະກຳແລະການຄ້າ; | 1.000.000 | 2.000.000 | 3.000.000 |
| 6. | ປອມແປງເອກະສານ, ປົດບັງຂໍ້ມູນຄວາມຈິງ, ຂັດຂວາງ ຫຼື ບໍ່ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງ; | 2.000.000 | 4.000.000 | 6.000.000 |
| 7. | ເຄື່ອນໄຫວກິດຈະການ ໂດຍບໍ່ສອດຄ່ອງ ກັບໃບຢັ້ງຢືນດຳເນີນກິດຈະການໂຮງງານ; | 3.000.000 | 6.000.000 | 10.000.000 |
| 8. | ນຳເຄື່ອງຈັກເຂົ້າໂຮງງານ ບໍ່ຖືກຕາມເປົ້າໝາຍຂອງການດຳເນີນກິດຈະການ ຫຼື ບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການກ່ຽວຂ້ອງ; | 2.000.000 | 4.000.000 | 6.000.000 |
| 9. | ນຳເຂົ້າ ຫຼື ນຳໃຊ້ທາດເຄມີອັນຕະລາຍ ຢູ່ໃນໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ; | 5.000.000 | 10.000.000 | 15.000.000 |
| 10. | ຂັດຂວາງ ຫຼື ບໍ່ປະຕິບັດຕາມຄຳສັ່ງ ຂອງເຈົ້າໜ້າທີ່ ເປັນຕົ້ນ ຕັດກົ໋ອ, ກະແຈ ຫຼື ໂສ້ ທີ່ເຈົ້າໜ້າທີ່ກວດກາໂຮງງານ ໄດ້ໜີບໃສ່ເຄື່ອງຈັກໃຫ້ຢຸດເຊົາການເຄື່ອນໄຫວ; | 2.000.000 | 4.000.000 | 6.000.000 |
| 11. | ປ່ອຍ ຫຼື ຖິ້ມ ສິ່ງເສດເຫຼືອ ທີ່ເປັນອັນຕະລາຍໂດຍບໍ່ໄດ້ຜ່ານຂະບວນການບຳບັດ ຫຼື ບຳບັດບໍ່ໄດ້ມາດຕະຖານ ຕາມລະບຽບການ; | 10.000.000 | 15.000.000 | 20.000.000 |
| 12. | ຕໍ່ອາຍຸໃບຢັ້ງຢືນ ດຳເນີນກິດຈະການໂຮງງານ | 1.000.000 | 2.000.000 | 3.000.000 |

| | | | | |
|---|---|---|---|---|
| | ກາຍມື້ໝົດອາຍຸ; | | | |
| 13. | ໃຫ້ສິນບົນແກ່ພະນັກງານລັດ; | 2.000.000 | 4.000.000 | 6.000.000 |
| 14. | ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ. | 1.000.000 | 2.000.000 | 3.000.000 |

**ມາດຕາ 56 ມາດຕະການທາງແພ່ງ**

ໃນກໍລະນີການດຳເນີນກິດຈະການໂຮງງານ ຫາກໄດ້ສ້າງຄວາມເສັຍຫາຍ ຕໍ່ຜູ້ອອກແຮງງານ, ບຸກຄົນທົ່ວໄປ, ຕໍ່ຜົນປະໂຫຍດຂອງພາກລັດ ຫຼື ລວມໝູ່ ຕ້ອງທົດແທນຄ່າເສັຍຫາຍຕາມຄວາມເປັນຈິງ ທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 57 ມາດຕະການທາງອາຍາ**

ໃນກໍລະນີຜູ້ດຳເນີນກິດຈະການໂຮງງານ ຫາກກະທຳຜິດທາງອາຍາ ເຊັ່ນ: ປອມແປງໃບຢັ້ງຢືນດຳເນີນກິດຈະການໂຮງງານ ຫຼື ເອກະສານທີ່ກ່ຽວຂ້ອງຕາມຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການທາງອາຍາ ແລະ ມາດ ຕະການໂທດເພີ່ມ ຕາມທີ່ກຳນົດໄວ້ໃນມາດຕາ 75 ແລະ 76 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013.

**ມາດຕາ 58 ມາດຕະການໂທດເພີ່ມ**

ນອກຈາກໂທດທີ່ໄດ້ກຳນົດໄວ້ໃນມາດຕາ 75 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013 ແລ້ວຜູ້ລະເມີດຍັງຈະຖືກປະຕິບັດມາດຕະການໂທດເພີ່ມອີກ ເປັນຕົ້ນ ໂຈະ ຫຼື ຖອນໃບຢັ້ງຢືນດຳເນີນກິດຈະການໂຮງງານ.

## ພາກທີ VII
## ບົດບັນຍັດສຸດທ້າຍ

**ມາດຕາ 59 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໂດຍສອດຄ່ອງກັບລະບຽບກົດໝາຍ ທີ່ກ່ຽວຂ້ອງ.

**ມາດຕາ 60 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ພິມລົງໃນຈົດໝາຍເຫດທາງລັດຖະການ 15 ວັນ.

ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ສະບັບເລກທີ 1301/ອຄ, ລົງວັນທີ 30 ກໍລະກົດ 2007.

ລັດຖະມົນຕີ

ມ ເຂັມມະນີ ພົນເສນາ